# ຣື່ອງຄຳກອນ

ຊຸດ

# ກະວີຊາວບ້ານ





໒໑໑

ປາໃນ

໒໐໐ ກີບ

ພິມເທື່ອທີໜຶ່ງ ຈຳນວນ 1500 ເຫລັ້ມ
ໂດຍ
ໜັງສືພິມ ໄຜ່ໜາມ ສບັບສັງຄົມວິຈານ-ຣາຍເດືອນ

ເຈົ້າຂອງແລະຜູ້ອຳນວຍການ ມະຫາ ສີລາ ວີຣະວົງສ໌

ຜູ້ຈັດການທົ່ວໄປ ນາງ ດາຣາ

ສຳນັກງານ ໄຜ່ໜາມ ຄຸ້ມອຸບມຸງຫ້ງ
ຕູ້ ປ. ນ. 36 ວຽງຈັນ [illegible] ພຣະຣາຊອານາຈັກລາວ

ໂຣມຄຳກອນ

ຊຸດ

# "ກະວີຊາວບ້ານ"

ຂອງ

# "ປາໄບ"

# ກ່ອນຊິເປັນ "ປາໃນ" ແລະ "ໂຣມຄຳກອນ" ເຫລັ້ມນີ້

ທີ່ກ້າອອກປາກແນບນຳ "ປາໄນ" ຕໍ່ທ່ານຜູ້ອ່ານໃນທີ່ນີ້ ກໍຍ້ອນເຫັນໝໍ່ນີ້ມາແຕ່ຍັງແດງ ໆ ເກີດມາກໍໂຕແຫລ້ ໆ ຂີ້ໄຫ້ຂີ້ແອ່ວ ຈົນແມ່ຈົ່ມວ່າຢ້ານຈະເປັ່ນລູກຊາຍດຽວສາແລ້ວວ່າຊັ້ນ ຄັນໃຫຍ່ພໍໄປໂຮງຮຽນກໍຜາກົດວ່າເປັ່ນເດັກທີ່ຫລັກຄວາມເກີນກວ່າຊິຢາກໄປນັ່ງຢູ່ແປ້ນມ້າຟັ່ງນາຍຄູນຳໝູ່ ອ້າງວ່າຮຽນຢູ່ເຮືອນກະໄດ້ໝັງສືພຸ້ນມ່ະ !

ແຕ່ເຊື້ອຍ່ອມບໍ່ໜີແນວ ເລືອດອັກສອນຄົງຈະລ້ຽງເກືອປຸກປັ້ນທາງໃນຢູ່ພໍແຮງ ຊ້ຳບໍ່ພໍກໍນອນເຝົ້າປົ້ນກາບກອນມາຕລອດປີຕລອດຊາດ ໄດ້ຍິນໄດ້ຟັ່ງແຕ່ເຣື່ອງອັນນະຄະດີ ກະວີວາທ ອ່ານສິນໄຊສຸດທຸກບັ້ນແຕ່ຢູ່ຫ້ອງທີ່ ໔ [ປ. ສອງ] ອາຍຸບໍ່ທັນຮອດສິບປີກໍເລີຍແຕ່ງເພງແຕ່ງກອນຫລິ້ນ ໆ ຕາມໃຈມັກຢູ່ໃນມຸ້ງ ແຕ່ງລົດ ໆ ບໍ່ໄດ້ຂຽນລົງເຈັ້ຽ... ແຕ່ງເວົ້າອອກມາດັງ ໆ ໃຫ້ເອື້ອຍນ້ອງຟັ່ງນຳ ແລ້ວກໍລືມ... ໃຜ ໆ ກໍຫົວຂວັນວ່າໝໍ່ສໍຫລ້... ຄັນພໍຮຽນຮອດຂັ້ນວິທຍາລັຍ [ປາວີ] ກໍເລີຍນຳຄະແນນພາສາລາວຍ້ອນຂຽນຫຍັງກໍເປັ່ນກອນໄປໝົດ ແຕ່ງຊະແຕ່ງຊາຍໄວ້ທົ່ວ ມອບໃຫ້ໝູ່ເປັ່ນທີ່ລະລຶກແລ້ວກໍລືມໄປອີກ ຄືບໍ່ບັນທຶກເອົາໄວ້.... ແນວຄິດທີ່ແຕ່ງກໍສີແກ່ ໆ ກ້າ ໆ ມາແຕ່ພຸ້ນແລ້ວ ຈົນພວກໝູ່ວ່າໃຫ້ວ່າ "ປາກກ້າຄາງແຂງ" ຄວາມນີ້ເຈົ້ານາຍຜູ້ໃຫຍ່ "ຫລືຜູ້ທີ່ຢາກໃຫຍ່" ຫລາຍທ່ານ ກະອາດຊິລັກວ່າຢູ່ດອກນໍ້—ວ່າບໍ່ຊ່າງ ?

ນັບແຕ່ຂີດ ໆ ຂຽນ ໆ ມາ ອ້າຍນ້ອງຊາຍກະຍັງລັກອາຍຢູ່ຫລາຍ ບໍ່ກ້າອອກຊື່ອອກສຽງ ຫລືບໍ່ກໍບໍ່ຮຽນຊື່ບໍ່ຮຽນສຽງມາເລີງ ໆ — ບໍ່ຮຽນເລື້ອຍຫລາຍຈົນຈື່ຊື່ [ນາມປາກກາ] ໂຕເອງກະບໍ່ໄດ້—ວ່າຊັ້ນ ! ເອົາເຂົ້າຄັກ ໆ ວ່າຈື່ບົດກອນຜູ້ເຈົ້າເອງບໍ່ໄດ້ ກໍເຄີຍມີວ່າມາ !

ແລ້ວ.... ໃນຊີວິດທີ່ຖືກຄວາມບໍ່ຕັ້ງໃຈພາຈອນໄປທົ່ວທິບນີ້ເອງ "ປາໄນ"

ກໍຈຶ່ງໄດ້ໄປຂຽນກອນຢາດຢາຍຊະຊາຍໄວ້ຫລາຍທີ່ຫລາຍບ່ອນໃນເມືອງລາວ ນັບແຕ່ເໜືອຕລອດໃຕ້ ກອນໝູ່ນັ້ນທີ່ດີ ໆ ກໍມີ ທີ່ບໍ່ເປັນຕາສົ້ມງົມກິນກໍສົ້ມປາກກໍມີ ແຕ່ຂໍທ່ານຜູ່ອ່ານຢ່າໄປມົວສົນໃຈເລີຍໄປ໊ ເພາະວ່າກາບກອນຄຳກະວີເກົ່າ ໆ ພວກນັ້ນ "ປາໄນ" ຮອດບໍ່ມີຕົ້ນສະບັບເຫລືອໄວ້ເປັນສົມບັດເລີຍ ພ້ອມກັບບໍ່ມີປື້ມຍາຄິດຄົ້ນຂຽນຂອງເກົ່າຄືນໄດ້ອີກເປັນແນ່ແທ້

ຊີວິດອັນບໍ່ແນ່ນອນໄດ້ຈອນຕໍ່ໄປອີກຫວ່າງນຶ່ງ ເຮັດໃຫ້ໝໍຕ້ອງປະຮ້າງຫ່າງໄກຈາກວົງການຂີດ ໆ ຂຽນ ໆ ຫລາຍປີເຕີບ ແລ້ວບາດນີ້ "ປາໄນ" ພ້ອມດ້ວຍສະຕິປັ້ນຍາອັນປາສຈາກອຳນາດແລະເງິນ ກໍຈຶ່ງໄດ້ກ້າວເຂົ້າມາຈັບປາກກາໃໝ່ອີກພັກນຶ່ງຫວ່າງສອງສາມປີຄືນຫລັງມານີ້ທີ່ນັ້ນ

ຖ້ອນນີ້ເອົາແບບເກົ່າປົນກັບແບບໃໝ່ ແລ້ວບາດຊີຊ້ຳກະມາລົງທ້າຍຄືເກົ່າຄືຫາຕົ້ນສະບັບເຮັດຢາບໍ່ໄດ້ເລີຍ ທີ່ທີ່ໄດ້ມາຈັດພິມເປັນເຫລັ້ມເປັນຫົວນີ້ ກະແມ່ນໄດ້ມາຈາກການສະສົມຂອງທ່ານຜູ່ຈັດການໂຮງພິມປາກປາສັກ ແລະທ່ານບັນນາທິການ "ເພື່ອນແກ້ວ" ດອກ ສະນັ້ນຄຳກອນຊຸດນີ້ຈຶ່ງມີຈຳເພາະ ຄຳກອນຈາກຊຸດ "ກະວີຊາວບ້ານ" ແຕ່ປານນັ້ນກະຍັງບໍ່ຄົບ ຍັງມີຫລາຍບົດທີ່ຫາບໍ່ພໍ້ບໍ່ເຫັນ

ແລ້ວທ່ານຜູ່ອ່ານກະອາດຊີຢາກຮູ້ວ່າ "ປາໄນ" ຂຽນກອນຂຶ້ນມາໄດ້ຍ້ອນຫຍັງແທ້ ໆ ນອກຈາກຄວາມກົດດັນຂອງສາຍເລືອດ ແລະຫູອັນເຄີຍສດັບຟັງມາຈົນລົ້ງ

ຂ້າພະເຈົ້າຢາກເວົ້າວ່າ ໝໍ "ຂຽນໄດ້ຍ້ອນຄວາມປມາດ" ຫລາຍກວ່າ....

ປມາດໃນຄວາມໝາຍຂອງໝໍກໍຄືວ່າ ເມື່ອໄດ້ອ່ານເບິ່ງກອນຂອງຜູ່ອື່ນແລ້ວ "ປາໄນ" ມັກຄຶດລົງຄວາມເຫັນແບບຈອງຫອງວ່າ "ຂຽນສ່ຳນີ້ ໃຜກະຂຽນໄດ້ຕວ່າ"

"ປາໄນ" ມັກຈະມີຄວາມເຫັນແນວນີ້ທຸກເທື່ອ ທີ່ອ່ານພ້ກອນຂອງກະວີອື່ນໆ [ຊຶ່ງກໍຂຽນອອກມາພໍຮາວນັ້ນແທ້ ໆ !] ຄວາມຈິງກະວີອື່ນ ໆ ທີ່ປາໄນນັບຖືບູຊາກໍມີຢູ່ຫລາຍທ່ານ ໂດຍຈຳເພາະແລ້ວ ຍາພໍ່ມະຫາສີລາ ວີຣະວົງສ໌ ຜູ່ຊຶ່ງເປັນບິດາໂດຍກຳເໜີດ ແລະໃນດ້ານວິຊາຄວາມຮູ້ກ່ຽວກັບການຂີດ ໆ ຂຽນ ໆ ຂອງພວກຂ້າພະເຈົ້າ

[ພວກຂ້າພະເຈົ້າມັກອ້າງຊື່ທ່ານບິດາເລື້ອຍ ໆ  ເພື່ອຊົດໃຊ້ກັບພວກບັນດິດຄຶດສັ້ນທັງຫລາຍ  ທີ່ມັກລຶບຊື່ເພິ່ນອອກຈາກຜົນງານທີ່ເພິ່ນໄດ້ພາກພຽນຣິຈນາໄວ້ເປັນສົມບັດຂອງຊາດ  ຫລາຍສິບເຣື່ອງ....]

ຄວາມປາຖນາຂອງ "ປາໄນ" ອີກແນວນຶ່ງກໍຄື  ພໍ່ບໍ່ຍອມຂຽນກອນຕາມຫລັກສູດສັນທະລັກສນະເລີຍ  ເຖິງແມ່ນວ່າພໍ່ຈະເຄີຍຣຽບຮຽງວິທີຂຽນກອນລົງເປັນວິທຍາທານໃນໜັງສືພິມ "ເພື່ອນແກ້ວ" ນັ້ນກໍຕາມ

ອັນນີ້ເປັນການປະພຶດເອົາແບບຢ່າງກະວີຕ່າງປະເທດທ່ານນຶ່ງ  ຊຶ່ງເຄີຍໃຫ້ທັສນະເປັນຄະຕິໄວ້ວ່າ "ຈົ່ງຂຽນແຕ່ງກອນຈາກຕຳຣາ ແຕ່ຢ່າແຕ່ງກອນຕາມຕຳຣາ...ກະວີນັ້ນເກີດກ່ອນຕຳຣາ [ສັນທະລັກສນະ]  ແລະກະວີກໍຈະອຸບັດໂດຍບໍ່ຕ້ອງອາສັຍຕຳຣາ...." ເຂົ້າລັກສນະຄຳໂຕງໂຕຍລາວເຮົາທີ່ວ່າ "ເຮັດຈັ້ງເພິ່ນ ຢ່າເຮັດຄືເພິ່ນ" ນັ້ນແຫລະ

ໂຮມຄຳກອນຊຸດນີ້ ມີຄວາມເປັນມາຢ່າງບໍ່ຄິດວ່າຈະເປັນມາໄດ້  ແຕ່ດ້ວຍຄວາມຄຶດຢາກໃຫ້ວັຣນະໂລກລາວເຮົາຈເຣີນຮຸ່ງເຮືອງ  ກໍຈຶ່ງຈັດພິມໄວ້ເປັນສົມບັດຂອງເພື່ອນຮ່ວມຊາດແລະຮ່ວມໂລກທຸກຄົນ ຊຶ່ງທຸກ ໆ ຖ້ວນໜ້າຄວນສແວງຫາໄວ້ອ່ານຫລິ້ນ  ເປັນຮາກຢາແກ້ອຸກອັ່ງ  ຫລືເປັນຄາຖາປັດເປົ່າສນຽດຈັງໄຮກໍໄດ້ ໃຫ້ບອກເລົ່າກັນຕໍ່ ໆ ໄປໃນບັນດາໝູ່ຄູ່ຍາດມິດ....

ຈະໄດ້ເປັນກຳລັງໃຈໃຫ້ "ປາໄນ"  ຂີດຄົມປາກກາເອົາບົດກອນທີ່ເຜັດມັນເຕັມໄປດ້ວຍອາທະສິລປ໌ອອກມາປ້ອນວັຣນະໂລກລາວເຮົາສືບຕໍ່ໄປອີກນຳກັນ.

ດ້ວຍຄວາມປຣາຖນາດີ

*ດວງຈຳປາ*

ວຽງຈັນ, ວັນທີ່ ໒໗  ສິງຫາ ໒໕໑໔

....ຂອບໃຈພາວະ [ຕາຍ ໆ] ທັງຫລາຍ ບັນດາທີ່ [ເສືອກກະໄຫລກ] ອຸບັດຂຶ້ນ ເຖິງແມ່ນພອກໃຈບາບຫຍາບຊ້າທັງຫລາຍ ໄດ້ພຍາຍາມກົດບີບພີບເຕັງໄວ້ຈົນສຸດສາມາດປານໃດກໍຕາມ...

ດ້ວຍອຸປະຕິການແຫ່ງປະຈັກເຫດອັນບໍ່ເພິ່ງປຣາຖນາ ຂອງມວນໝູ່ [ອະ] ມະນຸດຊົນເຫລົ່ານັ້ນ... ກະອິອັນເສົ້າແສບປົນກັບສຽງຫົວກ່ອນຣະທົມທຸກ ຈຶ່ງໄດ້ກຳເນີດຂຶ້ນແລະລີ້ຊ່ອນຢູ່ຄົບຖ້ວນ ພຽງພ້ອມໃນໜ້າຕໍ່ໄປນີ້...



# "ກຸຍກິ່ນສາວ-ຄາວຜູ່ຊາຍ"

ຂາຍໄປແລ້ວບໍ່ມີເຫລືອ ໃນຣາຄາ 250 ກີບ

# "ທະເລຊີວິດ"

ກໍຄືຄ່າໃນຣາຄາດຽວກັນ

ແຕ່ວ່າດຽວນີ້ ເຖີງຈະໃຫ້ແພງກວ່ານັ້ນສິບຕໍ່ ກໍບໍ່ມີຂາຍ

# ປາໃນ ກັບ ດວງຈຳປາ

ຈື່ງຂ້ງວເຂັນຊຸດທີ 3 ອອກມາ
ໃນບໍ່ຊ້າບໍ່ດົນນີ້

ໃຫ້ຊື່ວ່າ **"ໜາວໃຈ"**

ໃຜ ໆ ກໍວ່າແພງ ຈື່ງແປງຣາຄາໃຫ້ຕ່ຳລົງ

# ເຫລືອຢູ່ແຕ່ 200 ກີບ

ກອນບົດນີ້ແຕ່ງໃສ່ເຫດການປະຈຸບັນ   ຊຶ່ງຢູ່ໃນຣະຫວ່າງບຸນປີໃໝ່ລາວ ພ.ສ. 2513   ຍາມນັ້ນເສິກສົງຄາມມີຂ່າວວ່າທະຫານແກວເໜືອ   ຍົກໄພ່ພົນໂຍທາ ອາລະວາດໜັກສົມຄວນ ແລະທາງສະພາກໍຢູ່ໃນຣະຫວ່າງພິຈາຣະນາຣ່າງງົບປະມານ ສົກປີ 1970–1971 ເຫດການສຳຄັນທີ່ສຸດໃນຣະຫວ່າງນີ້   ກໍຄືມີການຈັບກຸມນັກສ້ຣາດ–ບັງຫລວງ ຊຶ່ງກໍຈັບແຕ່ໄດ້ປະເພດ ກຸ້ງກັບຊິວ ແລະບັນດານັກໜັງສືພິມ ຣາຍວັນ ຣາຍປັກ ທັງຫລາຍກໍຖືກນາບຄູ່ຢູ່ບໍ່ຂາດ   ກ່ຽວເຣື່ອງລົງຂ່າວການສ້ການໂກງຂອງບຸກຄົນລາງຄົນ "ບຸ່ນທາໝູແໝງ" ກຳລັງສັບສົນ   ຜູ່ປະມູນຊື້ໝູບ່ອນໂຮງຂ້າສັດໄດ້ແມ່ນບໍຣິສັດນັກຣົບເກົ່າ   ແຕ່ວ່າຜູ່ກຳເງິນຢູ່ທາງໃນຍັງແມ່ນເຖົ້າແກ່ຜູ່ເກົ່າ   ເຫດການຂນະແຕ່ງກອນບົດຕໍ່ໄປເປັ້ນມາດັ່ງນີ້   ຊຶ່ງຄວາມແຊບນົວເຜັດແສບມີຢູ່ແລ້ວໃນສຳນວນກອນ

24/7
ห้ามจำหน่าย



# "ທວາຍເຫດສຳລັບປີຈໍ"

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ 15 ເມສາ 1970]

★ ຂວບເມື່ອ ສັກຣາດລ້າ ເລີຍລ່ວງສິບສອງ ໄປນັ້ນ
ປີຣະກາລັບ ລ່ວງເລີຍໄລແລ້ວ
ຈໍຈອນເຂົ້າ ຄອງແທນທັນເຫດ
ພຸທສັກຣາດລ້າ ສອງ–ຫ້າ–ນຶ່ງ–ສາມ ຕື່ມນໍ

★ ປີຈໍ ຈຳຈື່ໄວ້ ນາມແຫ່ງສຸນັກ
ຫາກແມ່ນແມວແກວມັກ ໂມ່ນກິນທັງຂີ້
ນາງສັງຂານສະຖິດຍັ້ງ ເທິງຂຸນງົບໃໝ່
ຂໍທານເງິນຕ່າງດ້າວ ມາຊວ້ານເສຖການ

★ ນາງສັງຂານ ທັດດອກໄມ້ ສີເລືອດທະຫານລາວ
ມືຊ້າຍ ຖືກະລາໂປະ ທ່ຽວຂໍເງິນເຟື້ອງ
ມືຂວາ ກຳປືນໄວ້ ຄຸມເຊີງຍ້ານໝາເຫົ່າ
ໃຜມັກ ເວົ້າປາກໂປ້ງ ເຣື່ອງໂກງສ໌ ຣີບຣະວັງ

★ ທຳນາຍວ່າ ຈໍຂວບເຂົ້າ ຈັກມີເຫດຫລາຍປະການ
ບອກວ່າ ນາງສັງຂານ ມັກເສບ ເບີ–ຫອຍ–ໄຜ້
ມັກຣັບກິນສິນຈ້າງ ຣາງວັນເບ້ຽບາດ
ມັກສໍ້ຫລວງ–ຣາດ–ລ້ວນ ດາຖ້ວນຄູ່ສູ່ແມວ

★ ບອກວ່າ  ມາກຫລົ້ມມ້າ  ມີຢູ່ແປດມາຄະທຸດ

ເຂົ້າຄຸກ  ເສັຽສອງໂຕ  ເພື່ອເງິນຄະດີລ້ານ

ສາມຕົວ  ເມົາເມັຽນ້ອຍ  ນາງງາມປະກອດໃໝ່

ເຫລືອສາມ  ບໍ່ມີເງິນຊື້ປີ້  ເລີຍຈ້ອຍບໍ່ໄດ້ລອຍ

[ບໍ່ມີມາກຫລົ້ມມ້າຢູ່ "ປິສຊິນ" ຂ້າງສນາມກິລາ]

★ ເສດວ່າ  ມາກໃຫ້ມ້າ  ຫົກຮ້ອຍທ່າຮອມໝົດ

ຕົກຢູ່  ສອງສອນ  ສີ່ຊາວເສັຽແລ້ວ

ຕົກຮ່ອງ  ເສັຽສອງຮ້ອຍ  ຕົກຖາມອີກຮ້ອຍທ່າ

ເຫລືອນັ້ນ  ຕົກຕັ້ງອື້  ຄະດີສ໌ ຣາດ–ຫລວງ

★ ສ່ວນວ່າ  ເຂົ້າແລະມ້າ  ດີຢູ່ສໍາລັບເຈັກ

ເຣື່ອງຊົນໝູ  ຍັງຄົງເດີມ  ບໍ່ບ່ຽນແປງແພງລົວ

ເຖິງແມ່ນ  ນາຍທຸນຍ້າຍ  ມາເບັ່ນມັກຣົບເກົ່າ  ກໍດີທ້ອນ

ແຕ່ວ່າ  ຕອນຊຸ້ງຊື້  ຍັງຕັດຮ້ອຍລະຊາວ  ແທ້ມາ

★ ເຜີ່  ຖ້ວຍລະນຶ່ງຮ້ອຍ  ຍັງຄົງທີ່ບໍ່ແປຜັນ

ກາເຟນົມ  ຊາວປາຍ  ດັ່ງເດີມບໍ່ແປປົ້ນ

ໝັງສືພິມ  ຍັງເກັບເງິນບໍ່ທັນໄດ້  ຄືຕາຍຕັ້ງແຕ່ເກົ່າ

ກະອິຊາວບ້ານ  ກໍຄົງນັ່ງໃສ້ແຫ້ງ  ຄືດ້ານດັ່ງຫລັງ ທ່ານເອີຍ

*ຕໍ່ມາອີກບໍ່ພໍສອງອາທິດ* ກຸດສົງການລາວກໍ່ຜ່ານເຂດໄປ ເຫດການທີ່ເກີດຈາກສົງການເທື່ອນີ້ ຂ້າພະເຈົ້າໄດ້ເຫັນກັບຕາວ່າເຈົ້າຟ້າທີ່ຮັກສາຄວາມສງົບ ໄລ່ຍາດຄຸມ້າໂອຂັນຕາຕີນຕາມີພວກນັກຫລິ້ນນັກມ່ວນຕາມປະເພນີ ໄພ້–ຖົ່ວ–ປັ່ນໂປ ກໍ່ຖືກຈັບຣະຣາມບໍ່ເລືອກ ອັນນີ້ກໍ່ຕາມເຄີຍນັ້ນແຫລະບ້ານເມືອງເຮົາ ຄືກໍ່ຄົງຈັບໄດ້ແຕ່ກໍຣະນີ້ຂພາປາທູຄືເກົ່າ ສ່ວນທີ່ຫລິ້ນ [ບໍ່ຕ້ອງລັກຕ້ອງລີ້] ຢູ່ເຮືອນເຈົ້ານາຍເສຖຖີນັ້ນ ຜາກົດວ່າມີຮອດຄົນຍາມ [ຢ່າໃຫ້ເວົ້າຫລາຍເພາະວ່ານອກຍາມນັ້ນ ສ່ວນຫລາຍຢູ່ໃນເຄື່ອງແບບ]

ອັນນີ້ພາໃຫ້ຄິດຮອດກຸດເຈັກ ຊຶ່ງທຸກປີມີການແຫ່ເຊີ້ງສິງໂຕອ້ອມເມືອງ ເປັ່ນເຫດໃຫ້ການຈະຣາຈອນຝືດເຄືອງ ພ້ອມກັບນັນແຊວຟົດສນັ່ນພົດຄືນຊອດແຈ້ງ ແລ້ວຂະບວນແຫ່ສິງໂຕນັ້ນມີຮອດເຈົ້າຟ້າທີ່ອາຣັກຂາໃຫ້ຍ່າງມີກຽດ ເລີຍບໍ່ຮູ້ວ່າການປົກຄອງໃນບ້ານເມືອງເຮົາແມ່ນໃຜກັນແທ້ທີ່ເປັ່ນຜູ້ປົກຄອງ *ຄຳກອນຕອນນັ້ນກໍເລີຍອອກມາແນວນີ້*



# ສາຣະພັດຮ້ອນ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນເພື່ອນແກ້ວ ສະບັບລົງວັນທີ 30 ເມສາ 1970]

■ ຂອບເມື່ອ ຍ່າຍ ໆ ຟ້າ ປີໃໝ່ວຽນເຖິງ ພຸ້ນເຍີ

ສຸຣິໂຍເຜົາ ແຜ່ນດິນດາເອົ້າ

ຕ້ອງສັ່ງ ຕິດແອຣ໌ພ້າວ ໃຫ້ທັນກົງການດ່ວນ

[ຫາກແມ່ນເຮົາມີເງິນ]ເຄື່ອງເຮັດແອຣກໍ່ຕັ້ງຢູ່ແຕ່ເອືອມ ເອົາໄດ້ຄູ່ຍາມແທ້ແລ້ວ

■ ອັນນີ້ ເບີ້ນໄມ່ນ້ອຍ ຕ້ອງຊື້ນຣິມສາມສາ

ຖືເບີ້ນ ແອຣ໌ຊາມຊາ ມັ່ງມີເງິນລ້ານ

ເມື່ອຍັງ ເຂັນໃຈຂອງ ຕ້ອງທົນເອົາເອົ້າໄປກ່ອນ

ຍາມໃດ ລຸລາບໄດ້ ຈຶ່ງຕິນຊື້ສັ່ງການ ເພື່ອນເອີຍ

■ ຮ້ອນນີ້ ລາງຜ່ອງຊື້ນພຸ່ມໄມ້ ເບີ້ນຣົ່ມເບີຍເຍັ້ນ

ລາງພ່ອງ ເອົາຕົນລົງ ແຊ່ເຍັ້ນກາງນ້ຳ

ລາງພ່ອງ ຫວັງລອຍດ້ອຍ ຫອຍເບີ–ເບັ້ຽ–ຖື່ອ

ຖືກຍາມຊວຍ ຊ້ຳພັດແທ່ງຕື່ນຮ້ອນ ໃຄຍ້ອຍເຫື່ອໄຫລ ກໍມີ

■ ຊວຍເສັ້ຽເງິນ ບໍ່ແລ້ວ ຍັງຊວຍຖືກກຸມຈັບ ຕື່ມນໍ່

ລາກແກ່ ໄປຄຸມຂັງ ອາບ–ເກືອ–ຍຸງ–ຣົ້ນ

ທົນຫອຍຮ້ອນ ເຮໃຈຍ້ານບໍ່ບ່ອຍ

ລາງຄົນ ຊ້ຳຈົ່ມບ້ອຍ ຍ້ອມເດີຍຫລົ້ມມ່ອນຍິມ ບໍ່ຢ່າແລ້ວ

■ ຕຣຸດລາວ ຫລົ້ນບໍ່ໄດ້ ລາວ "ບໍ່ໃຫຍ່" ຄືເຈັກ
ຕຣຸດເຈັກ ມີສິງໂຕ ແຫ່ກາງກຸງກວ້າງ
ມີຕຳຣວດ ຄຸມເຊີງໃຫ້ ຫົວຂະບວນສິງໂຕແຫ່
ບາດວ່າສົງການລາວ (ເຈົ້າໜ້າທີ່) ຊ້ຳໄລ່ຍາດຄຸມ້າ ເຊົາຫ້ອນສາດກັນ

■ ເບັ່ນຫຍັງ ລາວຈຶ່ງຫ້າມ ການມ່ອນປະເພນີ ລາວນໍ
ຫ້າມປາມ ແນວລາມົກ ກໍຫາກເພິ່ງຄວນຫ້າມ
ຫ້າມຂາດ ການສົງນ້ຳ ປະເພນີຕັ້ງແຕ່ເກົ່າ
ກາລະ ມັບມີສ້ອຍ ຊອຍເລື້ອຍເມື່ອຍມະໂນ

■ (ຊ່າງເທາະ) ເພື່ອຄວາມຈົບຣຽບຮ້ອຍ ເບັ່ນຣະບຽບຕາມແຜນ
ປະບ່ອຍຫລາຍ ເຮີງໃຈ ສາດຂີ້ຕົມຂອງເປື້ອນ
ເອົາຜໍດີຜໍຫລ້າງ ລາງສຽງຊ້ຳວ່າເຄັ້ງ
ຄັນບ່ອຍຫລາຍ ຊ້ຳເລົ່າເຕີມເຕື່ອມ ລາມລົ້ງລວດລອນ ກໍມີ

■ ເຮົານີ້ ຄິດຢາກຫ້າມ ບໍ່ໃຫ້ດື່ມເມຣັຍ
ບໍ່ໃຫ້ ມີການຫັນ ປິ່ນງົວກິນລ້ຽງ
ຫ້າມການ ກິນສິນຈ້າງ ຣາງວັນບົນເບີກ ກໍຄວນແລ້ວ
ຫ້າມສ້ອງສຸມເສບກົ້ວ ການດ້ອຍອະມຸກບາຍ ບໍ່ຍ່ຳແລ້ວ

■ ມາດວ່າ ຫ້າມສິ່ງນີ້ ເຫັນທີ່ດີລັກ
ມັກໃຈຫລາຍຊຸມເຮົາ ເຫລົ່າປະຊາຊົນເຊື້ອ
ຍ້ານແຕ່ຂີງຂັງຫລົ້ນ ພໍປານແຕ່ບໍ່ປາບ ນັ້ນແລ້ວ
ຄືດັ່ງລີງຫລອກເຈົ້າ ສາວນ້ອຍປອກອາວ ແທ້ມາ

*ຂນະນັ້ນເປັ່ນຍາມຝົນ* ໃຜ ໆ ກໍຈົ່ມເອົາຈົ່ມອັ່ງນໍາຖນົນຫົນທາງ ໃນເມືອງວຽງຈັນທນ໌ ຂໍຢ່າໃຫ້ອະທິບາຍຂາຍຂີ້ໜ້າສະພາບແກ່ນແທ້ອີກເລີຍ *ອ່ານເບິ່ງໃນກອນໂລດກະໄດ້*



# ໃຜວ່າວຽງຈັນຫາບ໌ (ຊິບໍ່) ເສົ້າ ?

[ຈາກຄຳກອນຊຸດ "ກະວິຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບອັນທີ່ 30 ພຶສພາ 1970]

● ບັດນີ້ ກາລະນັບ໌ມ໌ຈົນ ຝົນເຮັ່ງເດືອນຫົກ
ຕົກບໍ່ມີຍາມເຫີຍ ເຫືອດເຊົາເບົາໄດ້
ໃຜວ່າວຽງຈັນແລ້ງ ໃຫ້ຈູງແຂນມັນໄປເບິ່ງ ເອົາທ້ອນ
ຕາມຕະຄອງຮ່ອງນ້ອຍ ນອງນ້ຳເນົ່າເໝັນ ຢູ່ມາ

● ບໍ່ຫ່ອນ ອຶດຢາກດ້ວຍ ນ້ຳເນົ່າແຄມຖນົນ
ໃຜບໍ່ ອະນາທອນ ກິ່ນເໝັນຂະຈອນຟຸ້ງ
ອົດທົນ ດົນເອົາທ້ອນ ຊາວວຽງເຈົ້າຢ່າຈົ່ມ
ຜລາເຮົາ ຫາກສ່ານີ້ ແປງສ້າງບໍ່ຊ່າງເດີຍ

● ອີກທັງ ການທ່ອງສ້າມ ທຽວໄຕ່ຕາມຖນົນ ກໍດີ
ແມ່ນຈັກ ມີອາຣະ ຣະບຽບການວາງໄວ້
ຕາມຊ່າງ ຫົວມັນທ້ອນ ໄຟແດງ—ມ້າດ່າງ
ຄວ່າວ່າ ມີເພື່ອໄວ້ ພໍອ້າງວ່າແຕ່ມີ

● ມີບໍ່ ເປັນປໂຍດນີ້ ມີແຕ່ຕື່ມຈິບຫາຍ
ຫາງມ້າ ລາຍເຜພັງ ແຕກກະຈອນເບັ່ນຫລົ້ງ
ຝົນຕົກ ລົມໄຫລທົ້ງ ເບັ່ນອັງບອກບໍ່
ຣົຖແລ່ນ ໂຕນກະແທກ "ຕັ້ງ !" ຂີ້ຕົມຟົ້ງສາດກັນ

● ນັບແຕ່   ຂຸດກົ້ມໄດ້   ບໍ່ທັນທົ່ວເຖິງປີ

ຍັງໃບ່   ທັນພໍ່ຜົນ   ກໍລອດເພພັງແລ້ວ

ຂອງບໍ່   ເບັ່ນຕານີ້   ບໍ່ມີຕາຍກໍຕາມຊ່າງ

ມີມ້າລາຍ   ກໍສ່ານັ້ນ   ບໍ່ມີໄດ້   ກໍສ່າດຽວ

● ໄຟແດງ   ເຫັນໂຫ້ໂລ້   ຣົຖຍັງປຽບກາງຕົວ

ຈະຣາ   ຈອມແຈທາງ   ກໍເບິ່ງດາຍຢູ່ໂທນໂທ້

ບໍ່ເຄີຍ   ເຫັນເອົາເຣື່ອງ   ບໍ່ໄພໃຫ້ເຂັດຫລາຍ

ສອນລາມ   ເລີຍຕ່າງລົ້ງ   ທະລອນຫຍ້າມຍ່າມໃຈ

● (ແມວວ່າ)....ໄມ້ບໍ່   ທັນແທກດ້າມ   ກໍພ້າວທ່າວທອນຕັດ

ບໍ່ຄິດ   ເລັງການໄກ   ເຫດຈັກມາພາຍໜ້າ

ແມ່ນບໍ່   ຍາວກໍຄຸງສັ້ນ   ເຣື່ອງພໍດີຢ່າຄອງຈອບ

ຄອນທີ່   ຄິດໄດ້ແນ່ງ   ດີແລ້ວກໍຈິ່ງທໍາ   ທ່ານເອີຍ

● ສຸດທີ່   ບໍ່ຢາກເວົ້າ   ຄວາມເກົ່າມັນຣົກ

"ໂອ໊ຍ—   ໄມ່ເອົາໄໝເລີຍ"   ມ້າບັກລາຍເມືອງຂ້ອຍ

ການຈັກ   ມາພາຍໜ້າ   ຍັງໜາແສນຍ່ານ

ຄັນຈັກ   ເຕີມຕື່ມສ້າງ   ຄອນໄດ້ຮິ່ມຕອງ   ຖີ່ທ້ອນ

● ມາດວ່າ   ເຮັດດັ່ງແລ້ວ   ກໍເບັ່ນດັ່ງຕາເຫັນ   ນັ້ນແລ້ວ

ເສັຽຊັບ   ສິນເງິນທອງ   ໝື່ນ—ພັນ—ແສນ—ລ້ານ

ເສັຽດາຍ   ເງິນເສັຽລ້າ   ຊາວປະຊາຜູ່ເສັຽສ່ອຍ

ເຮັດມ້າ   ລາຍສ່ານີ້   ກໍພອຍໃຫ້ກ່າວຕຽນ   ແທ້ນໍ

*ທ່ານ ບ.ກ. "ເພື່ອນແກ້ວ"* ອົດສາແບກສັງຂານອັນກອນຕາແມ່ຍິງ ມາຫາ ເລົ່າສູ່ຟັງວ່າ ມີຈົດໝາຍຈົ່ມນ້ອຍເນື້ອຕ່ຳໃຈມາແຕ່ເມືອງບາງກອກກ້ານນຶ່ງ ພ້ອມກັບດຶງຈົດໝາຍກ້ານນັ້ນອອກມາໃຫ້ເບິ່ງເປັນຫລັກຖານ  ສຣູບຂໍ້ຄວາມວ່າຜູ້ສາວລາວທີ່ສຶກສາເລົ່າຮຽນຢູ່ເມືອງນັ້ນຖືກສຽດສີທຸ່ມຮໍວ່າ ບໍ່ທັນສມັຍ ນຸ່ງແຕ່ສັ້ນ ຈົນແນມບໍ່ເຫັນຄວາມງາມຂອງຂາໂຕ

ເອີນໍ! ໂລກເມືອງບາງກອກ ຈັ້ງແມ່ນເປັນເອົາຮ້າຍ ອັນພວກສາວ ໆ ດາວສັງຄົມ  ເທື່ອຣະຍະທັນຕາເວັນຕົກຈົນລືມວັທນະທັມຂອງໂຕເອງ ແລ້ວຍັງບໍ່ພໍ ຍັງມາສະເອີຄືທຸ່ມຜູ່ເຂົາມີວັທນະທັມອີກ

ກະເປັນນິທານເຣື່ອງນຶ່ງຂອງຄົນໃນປະເທດຕາບອດຕາຈາວ

ແຕ່ວ່າການນຸ່ງສັ້ນ ໆ ຄືຜູ້ສາວໄທນັ້ນກະດີຢູ່ແນວນຶ່ງ   ຄືດີສຳຫລັບໄວ້ແກ້ຂັດ *ເນາະພີ່ນ້ອງລາວ !!*

# ແດ່... ນັກສຶກສາຍິງລາວທີ່ບາງກອກ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ່ 30 ມິຖຸນາ 1970]

▲ ແມ້ງນີ້ງ ສານສົ່ງໃຊ້ ຫຼຽວທ່ອງເຖິງຮຽມ
ບອກຂ່າວ ຄຳຈາຂານ ຈົ່ມຄອຍດີດ້ອຍ
ເຈັບເພື່ອ ໄທທາງພຸ້ນ ຜູ່ເມົາໃນບາງກອກ
ຖືຫຸ່ມ ມາດທະໜໍ່ນ້ອງ ຜູ່ສວມສົ້ນບໍ່ຽງສະໄບ ວ່າລື

▲ ຄວາມໃນສານບົ່ງຊີ້ ໃຫ້ຮຽມກ່າວກອນຖແລງ
ປອບປະໂລມໂອມຂວັນ ນ່ອນພະນາງທາງພຸ້ນ
ເຈົ້າຜູ່ ຈໍ່ຮະລີຜ້າຍ ຜາຍໄປຮຽມບ້ານເພິ່ນ ແໝງເອີຍ
ສັ່ງວ່າ ເກີດຕ່ຳຕ້ອຍ ກະໃຈດ້ອຍສຽດສີ ຮໍ່ມີ້

▲ ນ້ອງຢ່າໄດ້ທຸກຮ້ອນ ຄຳກ່າວຕຽນຕິ ມັ້ນທ້ອນ
ວ່າບໍ່ເດີນຕາມຍຸກ "ມຸ່ງກະໂປງຈຳກົ້ນ"
ວ່າບໍ່ເຮີງກະໂປງສັ້ນ ນຳແນວພວກຝຣັ່ງ
ດັດຈະຣິດຄຶດວ່າໂກ້ ໂຊວ໌ກົ້ນເປີດຂາ

▲ ຕາມຊ່າງ ເຂົາມັກເວົ້າ ຂົ່ມເພິ່ນຍໍໂຕ
ອັນເມົ່າເໝັນ ບໍ່ເຄີຍຍົກ ກ່າວອີງພິງອ້າງ
ຂອງເຮົາມີເຮົາອ້າງ ມີດີປະດາອວດ ຄອນແລ້ວ
ໃຜບໍ່ມີ ກໍຄວ່າຮ້ອນ ຮົນດ້ວຍຣິສຍາ ອຸ່ນເອີຍ

▲ ເຊີນມ່ອມ ພູມພາກດ້ວຍ ສັ້ນຕ່ຳ–ແພຂິດ

ບໍ່ກປິ່ນແຊມມອຍຜົມ ແບບລາວບໍ່ລືມເຊື້ອ

ໃຜຜູ່ມິນທາເອົ້າ ວ່າຍິງລາວບໍ່ກ້າວເກິ່ງ

(ຖືເສັຽວ່າ) ໝາຈອກຫອມເທົ່າຊ້າງ ສາມເຈົ້າອະເທີ່ຍທົ່ວ ບໍ່ຢ່າແລ້ວ

▲ ຂຶ້ນຊື່ ກຸງລ້ານຊ້າງ ບໍ່ເຄີຍແລ່ນນຳໃຜ

ຊາຫຍັງ ດົນລືມດຶງ ຢາກເຮັດດື້ພອກຕາຖ້ອ

ຂອງລາວມີ ກໍຄອນແລ້ວ ທີ່ດົນລາວຈັກຊູເຊີດ

ພູມໃຈ ທຸກສິ່ງລ້ອນ ທີ່ໝາຍຊື່ວ່າ "ຊາດລາວ"

▲ ອັນທີ່ ຮຽມແຕ່ງແຕ້ມ ກອນກ່າວກໍຍາວເຫລືອ

ຈຳຈາກ ລາລົງກອນ ກ່ອນຂອັນຊາວບ້ານ

ຂໍມ່ອມ ຍູກະເສີມສ້າງ ສຶກສາດີມີໂຊກ

ຢູ່ດີເຍີ ເຈົ້າຜູ່ຈອນຈາກບ້ານ ຮຽມແລ້ວຈຶ່ງຕ່າວຄືນ ພີ່ມາ

*ຕອນນີ້ ໜັງສືພິມ "ຊາດລາວ"* ກຳລັງສເນີປະຊາມະຕິ ກ່ຽວກັບບັ້ນຫາພາສາລາວ ເຣື່ອງສະກົດຕາມສຽງຕາມເຄົ້າ ຊຶ່ງທາງກອງອັນມະຄະດີ (ດຽວນີ້ສະຖາປະນາເປັນ "ສະພາຣາຊບັນດິດ" ແລ້ວ) ເຣັດຊົງເສີຍປານເບັ່ດເຫັນລູກ ໃຈກະເລີຍຄຶດຢາກເຢາະ ໆ ເພິ່ນເບິ່ງຈັກໜ້ອຍ ໃຫ້ຮູ້ສຶກໝໍ່ຄັນ ໆ ໃຫ້ເພິ່ນໄດ້ໂຜດກະຣຸນາເມດຕາປຣານີ ເປື້ອງປິ່ນໜ້າມາເອົາຫົວກັບມັບຊາເບິ່ງແດ່ຊຸ້ມດອກ ແຕ່ກະຈ້ອຍອັບ "ເພິ່ນບໍ່ເອົາຫົວຊາສ່ຳເຮົາຊາວບ້ານ" ໄດ້ຂ່າວວ່າເພິ່ນກຳລັງຫຍຸ້ງຍາກນຳວຽກລຶບຊື່ຜູ້ຣິຈນາໜັງສື ສິລປ໌ໄຊຍ໌—ສຽວສວາດ—ຊຽງໝ້ຽງ—ອຂຣະວິທີ———ຯລຯ ແລະອັນມະຄະດີອື່ນ ໆ ເປັ່ນສົລອົນ *ວ່າຊ້ານເດ໊ !!*



# ບັນຫາອັກສອນລາວຈະກາຍເປັນໂຣກຊຳເຮື້ອ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ 15 ກໍຣະກະດາ 1970]

▼ ແນວນະ— ມຸສໂລກເວົ້າ ຫລາຍຫລາກພາສາ ກໍບໍ່ງຶດ
ອັສ— ຈັນໃຈເຫລືອ ຕັ້ງແຕ່ລາວພົງເຊື້ອ
ຜະສົມຜະສານເວົ້າ ພາສາທະວິຊາດ
ຈັກວ່າ ລາວ—ຫລັ່ງຫລີ້ ຫາກເລີງເວົ້າສ່ວນສົມ

▼ ຄົນຜູ້ ໄກຫ່າງບ້ານ ຍັງກະວ່າງກະເວຈິດ
ຄຶດຮຸ່ງ ດິນແດນຫລັງ ກ່ອນເຄີຍກະເສີມສ້າງ
ວັນເຫລົ່າ ຫລົງລືມເຊື້ອ ພາທີຊອດຝຣັ່ງ ນີ້ມາ
ສັງບໍ່ ຄຶດອ່າວໄອ້ ພາສາເຊື້ອກຳເນີດຕົນ ແດ່ນໍ

▼ ອີກນຶ່ງ ການຂີດ— ຂຽນແຕ່ງແຕ້ມ ຂແນງພາກພາສາ
ບໍ່ວ່າ ຕາມສຳນັກ ຣາຊການ—ເມືອງບ້ານ
ຕາມຮອງຮ້ານ ຕຳຣາຮຽນ—ຈົດໝາຍເຫດ ກໍດີ
ຫາກຄວ່າຂຽນ—ຫາກຄວ່າໃຊ້ ບໍ່ເຄີຍຕ້ອງຄ່ອງກັນ ແທ້ແລ້ວ

▼ ການທີ່ ເປັນດັ່ງນີ້ ຍ້ອນເຮົາບໍ່ລົງຮອຍ ກັນມາ
ຝ່າຍນຶ່ງ ອີງຕາມຫລັກ ຝ່າຍນຶ່ງມີກົດໝາຍອ້າງ
ຄັນຈັກ ເອົາຕາມເຄົ້າ ມູລເດີມໃຫ້ແລ້ວທົ່ວ ໄປນັ້ນ
ກໍເລົ່າຄາ ເລົ່າຂ້ອງ ຂລັງດ້ອຍຣະບຽບການ ທ່ານເອີຍ

▼ ຄັນຈັກ ໂອມອ່ອນດ້ວຍ ດອມທີ່ດຳຣັດ ດັ່ງນັ້ນ

ພາກັນ ຂຽນຕາມສຽງ ຊ້າວ່າເຂີນເບັ່ນກະດ້

(ກວາງນໍກວາງ !) ສັງມາກິນໝາກຂາມບ່ອມ ໃຫ້ມັນຄາກົ້ງຂໍມັ້ງ ສັນນີ້

ໄມ້ໄບ່ທັນແທກດ້າມ ສັ່ງພົ້ນພ້າຜ່າລົງ ເຣັ່ງມໍ

▼ ຜູກມັດແລ້ວບໍ່ແກ້ ບໍ່ມານຂອດເບັ່ນປົມ

ຂຽນຕຳຣາພາສາ ບໍ່ຄິດການໄກໄອ້

ພາດຜິດ–ໄປໃຜຫຍຸ້ງ ແມ່ນລາວເຮົາຫລືຊາດອື່ນ

ຄອນທີ່ບັງຄັບໃຊ້ ຕາມຊີ້ບົ່ງການ ບໍ່ຍ່າແລ້ວ

▼ ມາດວ່າ ປະບ່ອຍໄວ້ ບໍ່ປົອປິ່ນແປງບົ່ດ ດັ່ງນີ້

ໂຣຄະ– ພັຍພາສາ ຊິເກີດເບັ່ນຊຳເຮື້ອ

ປະລະ ຈົນເກີນແກ້ ພາຍລຸນໄດ້ໂອ້ອ່າວ ອີຫລີແລ້ວ

ອະມຸ– ຊົນເກີດຫລ້າ ຊິແພຊີ້ສາບສະເອືອມ ທ່ານເອີຍ

*ລະຫວ່າງການສອບເສັງ* ເອົາໃບປະກາດທາງມະຫົມມະຫາປີມັ້ນ ເກີດມີການຕົກຕັກບໍ່ເຂົ້າທ່າຢູ່ແດ່ ທາງກົມມະການຊ້ຳຫູແຈ້ງຕາໃສ ໄປຮູ້ເຫັນພຶຕິການບໍ່ດີບໍ່ງາມຂອງສົງຄ໌ລາງຮູບເຂົ້າ (ບໍ່ຮອດຫ້າອົງຄ໌ຊ້ຳດອກ) ເຣື່ອງກະເລີຍແດງຂຶ້ນມາ ພຣະພວກຕົ້ນເຫດຊ້ຳຍັງບໍ່ອ່ອນຍອມ ກັບຊັກຊວນເອົາພຣະສົງຄ໌ອົງຄະເຈົ້າຜູ່ບໍ່ຮູ້ນັຍນຳກໍ່ການປະທ້ວງ ເຮົາມັນເປັ່ນຄົນປາກບໍ່ຢູ່ເປັ່ນສຸກ ກະເລີຍສອຍລອຍນຳເພີ່ນຕາມ ຄວາມຄິດຄວາມເຫັນຂອງເຮົາເປັ່ນການສ່ວນຕົວ ຜູ່ອື່ນບໍ່ກ່ຽວ ໃຜມີທັສນະຄວາມຄິດເຫັນບໍ່ຄືກອນບົດຕໍ່ໄປນີ້ກໍຂໍໂທດ ແຕ່ຢ່າລືມງ່ຽງຫູຟັ່ງ ໆ ໄວ້ *ຈັກເລົ່າແດ່ກໍ່ດີ...*



# ກາບຮຽບພິມດີດກັບອັງກິດບັ້ນຫລືຄອງສິງ ?

[ຈາກຄຳກອນຊູດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ 15 ສິງຫາ 1970]

△ ປີກໄບ່ ທັນຫຸ້ມກົ້ນ ກໍຫ້າງທ່າປະຊຸມສຽງ ກ່ອນແລ້ວ
ເຂົາໄບ່ ຈົງພຽງຫູ ກໍ່ຊິດຈົນຂັນສູ້
ຕົນຫາກ ຍັງທັນພ້ອມ ພຽງພໍກ້າເກັ່ງ ດີນັ້ນ
ມາດ່ອນ ຕົບປີກທ້າ ຜຍອງສູ້ບໍ່ໃຊ່ການ ຍ່າເມີ

△ ປຽບດັ່ງ ສິງກຸ່ມນ້ອຍ ທີ່ມີເຫດເບັ່ນໄປ ຮຸ່ງພັ້ນ
ຄຸມຄຽດ ກັນການເສັງ ກອດຄະແນນຄະມາເຈົ້າ
ຄັດເດັ່ງ ໃນຫົວຂໍ້ ຄຳຖາມ—ຄຳຕອບ
ເສັງຕົກ ເລີຍໄຫ່ຮ້ອງ ແຊວທ້ອງຕໍ່ກະຊວງ

△ ອັນທີ່ ການຮຽກຮ້ອງ ໃນແຫ່ງສິດທິ ວ່ານັ້ນ
ກໍຫາກ ເບັ່ນກິດຈາ ທີ່ຊອບທັນທັນອ້າງ
ແຕ່ກໍ ຄອນຄນິງຮູ້ ກາລຍານ ແລະ ມູນເຫດ
ໃຊ່ວ່າ ຫອນບ່າວທ້ອງ ບໍ່ທັນໄດ້ຮິ່ມຕອງ ກ່ອນມາ

△ ດຽວນີ້ ເມືອງເຮັ່ງຮ້ອນ ຕົກທີ່ກະລິຍຸກ
ສົງຊຶ່ງ ໄລຕັນຫາ ພາກພຽນຮຽນຮູ້
ຄອນທີ່ ທຳຕົນພຽງ ພຣະສັມມາຕຣັດບອກ ປາງນັ້ນ
ວາງຈິດ ຕັ້ງທ່ຽງໝັ້ນ ແຕ່ໃນຮົ້ວສາສນາ ຊອບແລ້ວ

△ ບໍ່ຫ່ອນ ວາມິດດ້ວຍ ອົງປະກອບບໍຣິຫານ
ພາໃຫ້ ການປົກຄອງ ໝູ່ສົງບໍ່ຄົງໝັ້ນ
ແຕກຕື່ນ ອົລເວງມ້າງ ສຖາບັນພຸທສາດ ດັ່ງນີ້
ສັກແຕ່ ເບັ່ນພຣະລ້າ ເປືອງຜ້າແຜ່ນໄຕຣ ແທ້ແລ້ວ

△ ຍາມຮຽນ ເທື່ແຕ່ດ້ານ ພົມດິດ–ອັງກິດ

ບໍ່ຈຈັຍ ໂຍມພຽນຫາ ພຣະເນນເຄນໃຫ້

ຂົນໄປ ເວນອາງຈ້າງ ແຕ່ໂຮງຮຽນພົມດິດ

ຫວັງທໍ່ ໃບປະກາດນ້ອຍ ມາໂອ້ອອດກັນ ໝ່າຍມໍ່

△ ຍາມເສັງ ຈໍ່ງບໍ່ແຈ້ງ ໃນແຕ່ງຕໍາຣາ

ຮຽນໝົດປີ ເປົ່າດາຍເສັຽຖົ້ມ

ປອມລອກ ລາຍມືດ້ອຍ ກົລໂກງຮ້ອຍແປດ

ຫວັງພຽງ ລາບຍົດຊັ້ນ ອັນເບັ່ນຂັ້ນສົມມຸດຖານ

△ ສົງບໍ່–ຄວນໂລບດ້ອຍ ລາບ–ຍົດ–ສັຣເສີນ

ກົລໂກງ ການເບືອນບິດ ລ່າຍພາງຄວນເວັ້ນ

ຍາມໃດ ກັມມໍາພ້ ຄາຄໍຄາຍບໍ່ອອກ

ຄິດັ້ງ ເສັງເທື່ອແລ້ວ ທີ່ມໍາໄດ້ໄລ່ທັນ

△ ເວນຈັກຕົກແຕ່ເຈົ້າ ຕົນຜູ້ກະທໍາຜິດ

ຕລອດທັງວົງການ ຄນະສົງກໍໝອງເສົ້າ

ເສັຽດາຍເດ໊ພົມຜ້າ ເຫລືອງງາມທີ່ເປື້ອງຫົ່ມ ດິງມັ້ນ

ກັບເກີດ ລາມລຸກໄໝ້ ມະໂນເຈົ້າຜູ້ຂາດສິລ ວ່າລີ

△ ການດິດພົມດັ່ງມັ້ນ ລີໃຊ່ຄອງສົງ

ການຮໍ່າຮຽນອັງກິດ ໃຊ່ລີຄອງເຕົ້າ

ຮຽນວ່າ ການຮຽນຮູ້ ໃນພຣະທັມມັ້ນຈໍ່ງແມ່ນ

ບຸຕຣາພຸທເຈົ້າ ຄວນຕັ້ງຕໍ່ແຕ່ທັນ ຊອບແລ້ວ

*ຕົກມາທາງເດືອນນີ້* ໜັງສືພິມຣາຍວັນທີ່ວອຽງຈັນ ມີແຕ່ຂ່າວສໍ້ຂ່າວໂກງ ຂ່າວກິນບ້ານກິນເມືອງ ກິນກັນມິດ ໆ ຈົນເບື່ອຂ່າວບໍ່ແລ້ວ ລາມມາຮອດຂ່າວເຈົ້ານາຍອົມເຫັງເຕັງເຕັກພອກໄພ່ພ້ຳພ້າແຫລ້.... ບ່າ... ນ້ຳໃຈພີ່ນ້ອງລາວເຮົານໍ່.... ເສິກນອກກໍ່ພໍ່ເສິກນອກ.... ແລ້ວຍັງມີເສິກໃນອີກ.... ເສິກໃນມຸ້ງມັນຫົນບໍ່ໄດ້ ກໍ່ປະຮ້າງຫ່າງໜີກັນໄປ ແຕ່ເສິກໃນວົງສັງຄົມປະຈຸບັນນີ້ຈັ່ງໃດກໍ່ຂໍວ່າກັນກ່ອນເທາະ... ກົດໝາຍຣັຖທັມມູນໃຫ້ສິດເຮົາ ເວົ້າໄດ້ປາກດັງພໍ່ແຮງແລ້ວ.... ອິນບໍ່ປາກບໍ່ເວົ້າຈັກນ່ອຍຊິຫາວ່າ *ບໍ່ຮູ້ຈັກໃຊ້ສິດ*...

# "ຫອບ" ຂີ້ດິນດາກ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ່ 30 ສິງຫາ 1970]

▽ "ຂີ້ຂ້າ ມາຈາກໄດ້ ອຳນາດເປັນນາຍ ກໍມີ
ເລີຍເລົ່າ ຫລົງມົວເມົາ ຍົດຖາບັນດາຊັ້ນ
ເຮີງເທີ່ ຈົມເຈີຍ "ຂ້າ" (ນີ້ລະ !) ອິດທິພົນມີມາກ
(*ຕັ້ງທີ່ແທ້ ຂີ້ດິນດາກ*) ຕິດຫົວ ແຕ່ລະນ້ອຍ ໂງແງ້ນວ່າແມ່ນຫອມ

▽ ອັນວ່າ ຍົດແລະຊັ້ນ ທີ່ຕັ້ງແຕ່ງວ່າເປັນ*ນາຍ* ດັ່ງນັ້ນ
ບໍ່ໃຊ່ ເປັນນາຍຄຸມ ຂູ່ເຂັນຊາວບ້ານ
ເຮັດວຽກ ຕາງຊາວບ້ານ ຜູ້ໂຮມເງິນກັນອອກ
ໂຮມເງິນ ມາວ່າຈ້າງ ໃຫ້ຊຸມເຈົ້າວ່າການ

▽ (ຄວາມຈິງ ຂ້າຣາຊການ) ກໍຫາກ ແມ່ນ*ລູກຈ້າງ* ນ້າຕ່າງປະຊາຊົນ ແທ້ດາຍ
ຫາແມ່ນ ເປັນເທວາ ຂີ້ໃສ່ດາວເດີນຟ້າ
ຕັ້ງວ່າ ຄົນ (ເດີນດິນ) ກິນເຂົ້າ ຫົວດຳຄໍກົ່ວ ເຮົານີ້ແລ້ວ
ແຕ່ວ່າ ເປັນຜູ້ຮູ້ ການບ້ານຜ່ານເມືອງ

▽ ອັນທີ່ "*ນາຍ*" ໃຫຍ່ແທ້ ນັ້ນແຄມຢູ່ "*ເພິ່ນດີຫລາຍ*"
ແນວພຍານາໂຄ ບໍ່ຫ່ອນກິນຈິວສ້ອຍ
"*ນາຍກະເທີນ*" ນີ້ຕີ້ "ແຍ້" ເກັບກິນໂກງບໍ່ເລືອກ
ຄືດູ່ ເລີມ–ຄໍ–ຄ້າວ ຊີວກຸ້ງຊີ່ຫ່ອນຫລໍ

▽ ອັນຈັກ ເສັຽຊື່ເຈົ້າ "ນາຍໃຫຍ່" ຄືສາຍໃຍ (ແປວ່າພວກພ້ອງວົງວານ)

ເສືອບໍ່ ກິນມັງສາ ແຫ່ງເສືອດຽວເຊື້ອ

ລູກນ້ອງ ກິນນາຍແກ້ ກັນຕາງກັ້ນຕ່າງ

ເຂັນບໍ່ ໃຫ້ແລ່ນຕ້ອງ ພົງເຊື້ອແຫ່ງເສືອ ແທ້ແລ້ວ

▽ ລາງຄົນ ປິນບ່າຍອື້ນ ຈາກໄພ່ສາມັນ

ພໍເປັ່ນ ດີມີສຸກ ໃຫຍ່ໂຕຄຸຍໂອ້

ຄຶດດັ່ງ ງູສິງເຮືອຍ ລົງມາປ່າຕື່ນ

ຕົນຕິດ ຫົວເທີ່ຫ້າວ ວ່າຫອນຊ້ອນປົ່ງຊອນ ກໍ່ມີ

▽ ຄອນທີ່ ຄຶດຈື່ໃຈ້ ຈຳຈື່ສັງວອນ

ວ່າຕົນ ກິນເງິນເດືອນ ຣາສດອນຊາວບ້ານ

ບໍ່ແມ່ນ ມູນມັງເດົ້າ ບັຣພະການພໍ່ຕູ້ເກົ່າ ໃຜມາ

ບຸນຄຸນ ເພິ່ນຊູບລ້ຽງ ກໍ່ຄວນນ້ອມຖ່ອມຕົນ ຊອບແລ້ວ

ห้ามจำหน่าย

*ເຣື່ອງໄທບ້ານຕົ້ນເຜິ້ງ* ຮຽກຮ້ອງເອົາພຣະພຸທຮູບຄືນນີ້ ເປັ່ນຂ່າວໃຫຍ່ໃນຮອບເດືອນກັນຍາ 1970... ຂ່າວໃຫຍ່ຈົນຂຶ້ນຮອດກະຊວງທັມມະການ ແລະຮອດກະຊວງຕ່າງປະເທດຂອງໄທ ບ້ານໃກ້ເມືອງມໍ່ຄົນລະຟາກນ້ຳຂອງ (ແຕ່ກ່ອນຢູ່ຄົນລະຟາກຟູ.... ພຸ້ນກໍ ຟາກໂຄຣາດລົງໄປທາງສຣະບູຣີອີກພຸ້ນກໍ.... ດຽວນີ້ໄທຫຍ້າມາໆໆ ຈົນຄຸງນ້ຳຂອງແລ້ວ) ລາວໄທບໍ່ແມ່ນອື່ນໄກພີ່ນ້ອງກັນເພິ່ນວ່າ!! ບາດເທື່ອລາວຟາກພຣະພຸທຮູບໄວ້ແລ້ວ ທວງເອົາຄືນ ເພິ່ນຊ້ຳຕອບມາວ່າ ກົມສິລປະກອນໄທຂຶ້ນທະບຽນເປັ່ນສົມບັດຂອງຊາດ (ໄທ) ໄປແລ້ວ ວ່າເນ!!

ໃນເມື່ອພູ່ເຮັດພໍ່ເຫລືອມພ້າກັນແນວນີ້ ເຮົາກໍເລີຍຮ້ອງໄຮຊ່ອຍສຽງໄຮ່ຮ້ອງຂອງພີ່ນ້ອງລາວບ້ານຕົ້ນເຜິ້ງ... ຫວ່າງບໍ່ຈັກເດືອນມານີ້ຄືນຂ່າວວ່າ *ຈຶ່ງຄືນໃຫ້ຫລືໃດນີ້ລະ !!*

# ອັນເນື່ອງມາຈາກການເຄື່ອນໄຫວ
# ຂອງຊາວພຸທບ້ານຕົ້ນເຜິ້ງ

[ຈາກຄຳກອນຊຸດ "ກະວິຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ່ 15 ກັນຍາ 1970]

□ ຊາວພຸທ ລາວລຸກຂຶ້ນ ທະລອນຕື່ນມຶນຕາ ຊອບແລ້ວ
  ທວງຫາວ ຖາມສິດທິ ເຄື່ອນໄຫວໃຫ້ໄທຮູ້
    ວິງວອນໃຫ້ ໄທຄືນພຸທຮູບ
      ກ່ອນທີ່ ເຄີຍຝາກໄວ້ ຄືນໃຫ້ແກ່ລາວ ວ່ານາ

□ "ໄທ" ປະກາດໂບ້ງ–ບ້າງ ປານວ່າມັກເລງໂຕ
  ບອກວ່າ "ໄອ.ໂນ.ເດ." ບໍ່ຮຽນທະບຽນເປັນໄທແລ້ວ
    ບ໊ະ ! "ຢາກດັງ" ຫຍັງກະດ້ ຂໍຄືນດາຍດອກເພື່ອນ
      ສັງເລົ່າ ເຮັດດ້ານ ໆ ວ່າໂອນຂຶ້ນແກ່ໄທ ດັ່ງມັ້ນ

□ ໂລກນໍ່ໂລກນັກ "ບ້ຽວ" ຫລົບຫລີກເບັ່ນທາງ
  ບິດເບືອນ ຫາກົລໂກງ ລ່າຍພາງທັງສ໌
    ຂອງເພື່ອນ ເວນອາງມ້ຽນ ໄມຕຣີແຝງຝາກ
      ສັງເລົ່າ ອົມ "ຂເມືອບ" ເຂົ້າ ພຸງທ້ອງພະລະການ ດັ່ງນີ້

□ ຊາແຕ່ ຸທຮູບເຈົ້າ ອົງກ່າວໃນກອນ ເມື່ອໃດ
  ຍັງອົງ ນໍຣະກົດຂຽວ ນິງເມືອງວຽງກວ້າງ
    ປາງເມື່ອ ແດນລານຊ້າງ ເສັຽຊັຍຂຶ້ນສ່ອຍ ໄທພຸ້ນ
      ໄທກໍ ທຸບທອບທົ໊ວ ເມືອມ້ຽນທີ່ໄທ ຖ້ອນແລ້ວ

□ ອັນນີ້ ເຮົາບໍ່ເວົ້າ ທ້ອງທ່າວຫາວຖາມ ເພື່ອນມາ

ເພາະເພື່ອໄທຕີຍຶດ ຄອບຄອງເປັ່ນເຈົ້າ

ເສັຽຊັຍ ເສັຽເມືອງກວ້າງ ເສັຽອົງພຸທຮູບ ຕາມຊ່າງ

ແຕ່ສ່ວນ ຜົ່ງຝາກໄວ້ ຄອນໄດ້ສົ່ງຄືນ ຊອບແລ້ວ

□ ມິດຈັກ ຍິນຢູ່ໝັ້ນ ເພື່ອເຮົາຂອດໄມຕຣີ ເພື່ອນເອີຍ

ເພື່ອນວາງໃຈໃນສັຈ ຈິ່ງຝາກຜົ່ງຍັງເຈົ້າ

ເພື່ອນປຶກຂາແຂງກ້າ ຈິ່ງໂອຫັງໂອ້ອວດ

ຖືທຸ່ມ ລາວປະເທດນ້ອຍ ບໍ່ກົວຢ້ຳຍ່ຳເກງ ວ່າລື

□ ສັງຂົມເຫງບອບບີ້ ຣັດບີບຫົວໃຈ ເຮັ່ງມໍ່

ແມ່ນບໍ່ກາງອາສັຍ ເພາະເພື່ອລາວຫລັງຫລ້າ

ກໍ່ທໍ່ ຄອນກູນເກືອ ໄມຕຣີຕຸ້ມຕ່ອມ ດີດາຍ

ໃຍບົວ ຕັດຂາດບັ້ນ ດຽວໄດ້ເມື່ອໃດ ເພື່ອນເອີຍ

□ ຂໍດີ ໆ ບໍ່ໃຫ້ ອວດເກັ່ງໂອຫັງ ຊອບລື

ລາວກໍ່ມີຫົວໃຈ ຈື່ຈຳເຄືອງແຄ້ນ

ແມ່ນວ່າມີເງີນລົ້ນ ເຕັມຖົງຍ່າພ້າວອົ່ງ ຫລາຍເນີ

ລາງເທື່ອພອມບ່ອນໃສ້ ຖົງເບັ້ງຊີເລົ່າໂກນ ບໍ່ຢ່າແລ້ວ

□ ແດນລາວ ຕັ້ງແຕ່ກີ້ ດຸງເຂດ "ອີນາງໂມ"

ຄິດວ່າ ລາວໄລລືມ ເຣື່ອງຫລັງເສັຽສ້ຽງ ລືເພື່ອນ

ລາງເທື່ອ ມີຄົນກ້າ ຕອມພົນໂຮມຊາດ

"ແດນອີສານ" – "ນ່ານເຈົ້າ" ຊິໄປຄ້າງຢູ່ໃສ

□ "ໄທ" ດົງເຫລືອທີ່ໝ້ອງ ພໍກະຕ່າຍນອນຕາຍ

ເກີດຂເມນ ທວງຖາມ ແຂກ "ມາເລ" ກໍ່ຫລອນທ້ອງ

ໄທຈັກເຫຫັນໝ້າ ຫາໃຜໄວ້ເປັ່ນເພື່ອນ

ຫາກໂອຫັງບ່ອງບ້າ ສະຫາວອ້າງອວດຕົນ ດັ່ງລື

*ເວົ້າອີ່ຫຍັງກະບໍ່ເລີກບໍ່ແລ້ວ* ຍັງຕ້ອງໂງຄືນມາປາກປຽກປາກເມືອກ ນຳການສ້ຣາດບັງຫລອງອີກ.... ບໍ່ເອົ້າກະບໍ່ໄດ້ມັນຍັງບໍ່ທັນດັບພໍ່ດັບແມອມັນເທື່ອ.... ເອົ້າຢູ່ເລື້ອຍ ໆ ປານນີ້ບ້ານເມືອງກໍ່ຍັງທຸກຍາກປາກໝອງລົງໄປຢູ່ບໍ່ເຊົາ.... ຂຸມໂບ ປະມານແຕ່ລະປີເລີກລົງໄປຊັກໃຊ້.... ເລີກຈົນກາຍຂຸມເບັ່ມສ້າງ.... ເບັ່ມເຫວໂບ ປະມານໄປແລ້ວແຕ່ເທິງ.... ບໍ່ເລີກໄປໜ້າກະບໍ່ທົມ ຂອງວ່າຜູ່ຮັບຜິດຊອບໃນການຫາ ເງິນເຂົ້າຫລວງມີແຕ່ຫາທາງກິນ.... ກິນທີ່ໃດບໍ່ພໍຈົນໃສ້ຊິແຕກຕາຍແລ້ວຍັງບໍ່ຮູ້ອີ່ມ....

ໃຫ້ມັນໃສ້ແຕກຕາຍອີ່ຫລີກະຄືຊິດີບໍ່ປອກ.... ອັນພວກມັກຍັກຍອກເບືອນບິດ *ຈົນຕ້ອງແຕ່ງກອນ "ບໍ່ຽວ" ໃສ່ນີ້ກໍດາຍ*



# ບ້ຽວ (ຕລອດຣາຍການ)

[ຈາກຄຳກອນຊຸດ "ກະວິຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບອັນທີ່ 15 ຕຸລາ 1970]

* "ດົມ" ຜູ່   ເກັບກ່ຽວຫຍ້າ   ມຸງທົ່ງລານຫລວງ
ຍາກຈິ   ພໍພຽງມຸງ   ທົ່ງຫລວງດູກອ້າງ
"ຣັຖ" ຜູ່   ຫາຣາຍໄດ້   ຈຸນເຈືອທັງປະເທດ
ຍາກຈິ   ພໍຈ່າຍໃຊ້   ຣາຍໄດ້ບໍ່ທໍ່ເສັຽ

* ຍ້ອນມີ   ຣອຍຮົ່ວແບ້ວ   ເບັ່ນບ່ອງຫລາຍທາງ
"ຂາເຂົ້າ"   ຮວາຍເບັ່ນສາຍ   ຣາດລາມຕາມຂັ້ນ
ເກັບໄດ້   ມາເບັ່ນລ້ານ   ສເນີນາຍດ້ານເດີ່ງ
ນາຍກໍ   ຫາແງ່ "ບ້ຽວ"   ລິບສູນຖື້ມອີກນຶ່ງຕົວ

* ກວ່າຈັກ   ເຂົ້າສູ່ທ້ອງ   ພຣະຄັງໃຫຍ່ທີ່ຂຸມເລິກ
ເກືອບບໍ່   ເຫລືອພໍສິບ   ສ່ວນພັນໃນລ້ານ
ຣັຖຕ້ອງ   ຂົມຂວາຍໃຫ້   ຂຸມເຕັມເຕັ້ມແລ່ນ
ງົບປະ—ມານຂາດໃຊ້   ຕ້ອງຍືມກູ້ປະເທດໄກ

* "ຂາອອກ"   ຊອກແງ່ບ້ຽວ   ຍັກຍອກທາງລັບ
ຫາຫລັກ – ຖາມກົລໂກງ   ຫລ່າຍພາງທາງສ້
ຊື້ສອງ   ລົງບັນຊີທ້າ   ຫາກິນປັ້ນປອກ
ລອກບັນ—ຊີຕື່ມຂັ້ນ   ອິງອ້າງອອດສເນີ

* ຊື້ຂອງ   ແຕ່ລະໜ້ອຍ   ບັນຊີບອກເບີ້ນຊາວແສນ
ສັ່ງຂອງ   ສອງຣາຍການ   ບອກນາຍວ່າມີຮ້ອຍ
ເກັບພາສີສິນຄ້າ   ໄດ້ສອງກໍເກົ້າໂກດ
ນຳເງິນເຂົ້າສູ່ຫ້ອງ   ພະຄັງກອ້າງແຕ່ແປດແສນ

* ສິນຄ້າ   ມາຮອດຫ້ອງ   ຍັງທ່າພາສີ
"ເຈັກ" ເສດຖີທົວໃສ   ຈອບອອຍສົມຈ້າງ
ຂອງ "ອົ້ວ" ມີສາມໂລ້ຍ   ລາຍການມາຮອດ
"ອົ້ວ" ຈ່າຍລີ້ສີ່ລ້າງ   ໃຫ້ລື້ແຈ້ງແຕ່ເດິງລຽວ

* ແມວນີ້   ບໍ່ແມ່ນສ້   ຣາສດອກ–ແຕ່ບັງຫລວງ
ບໍ່ອາດ   ສັງຂຍາມບ   ຫລາກຫລາຍລາຍ "ບ້ຽວ"
ມັນຫາກ   ເຫລືອແຮງຮ້າຍ   ດັງໄຟດົ້ມຊູ່ມ
ຜົມ (ອັບປີມັນ) ຫາກ  ລົມລອດມື້   ດັງໄດ້ກໍບໍ່ເຮືອງ  ແທ້ແລ້ວ

* ຮຽນຍິ່ງຄິດຍິ່ງເອົາ   ອົກຊິແຕກຕາຍດັບ
ຄິດຮຸ່ງ   ຄ່ຳຫວາຍຜົ່ນ   ແຫ່ງອົງພຸທໂທເຈົ້າ
ອັນທີ່   ຜົມຕົກເຫັ້ງ   ຊາຍໂຫມຕັ້ງອົ່ງ
ກາງຈັກ   ກອຍຕັ່ງມ້າ   ດາໄດ້ດັ່ງໃຈ

* ຮອຍທີ່   ແສນປລາດລ້ຳ   ໃຫໃຫຍ່ຍັງເຫລືອ
ໃຫຍ່ອມ   ຍັງທັນມີ   ທ່ອງພໍພຽງນ້ອຍ
ຄິດໄປຫລາຍເລີຍປູ້   ສມອງຕັນຕັບຊິແຕກ
ຄິດໄປຫລາຍແຫ່ງຫຍຸ້ງ   ພໍແລ້ວບໍ່ຢາກຈາ

*ແລ້ວກໍມາເຖິງປາງບຸນຈ່ວງເຮືອ* ຊຶ່ງເປັນບຸນປະເພນີຂນານແທ້

ແລະຂນາດໃຫຍ່ປາງນຶ່ງຂອງລາວ.... ຜັດແຕ່ຈື່ຄວາມໄດ້ກໍເຫັນເຮັດກັນມາຄືຕາເຫັນດູ່

ປີ.... ແຕ່ປາງພໍ່ປາງແມ່ກໍຄົງເຮັດຄືຕາຍດຽວກັນນີ້ເປັນແນ່ແທ້

ມີຫລາຍຄົນທຸ່ມຣໍາທ້າທາຍປາໄນວ່າຄືຊິແຕ່ງເປັນແຕ່ກອນ... ລອນ ໗ ຂຽນ

ກາບຄືຊິອ່າງຍ່າງ ກໍເລີຍລອງບ່າຍປາກກາອອກມາເປັນກາບຕາມອາດ

ຂໍໂທດເທາະ... ໃຫ້ຂຽນຫຍັງແຕ່ງຫຍັງກໍຄົງບໍ່ພົ້ນຖາກຖາງສຽດສີຕາມເຄີຍ

ຂອງມັກແນວນີ້

ແລ້ວຢູ່ເມືອງເຮົານີ້ກໍເຫັນມີແນວໃຫ້ເວົ້າໃຫ້ວ່າໄດ້ຢູ່ບໍ່ຂາດປາກ*ອິຫລິເນາະ*



# ກາບເຊີ້ງເຮືອຊ່ວງພັທບາ

[ຈາກ "ອານາຈັກກະວີ" ໃນ "ເພື່ອນແກ້ວ" ສະບັບອັນທີ່ 15 ຕຸລາ 1970]

ປິດສ່ອງເບິ່ງ—ສ່ອງປິດສ່ອງເບິ່ງ ປິດແລ້ວສ່ອງກາບເຊີ້ງໄຫເຮືອ
　　ພາຍເຮົາພາຍຂໍ້ເຫລົ້າເຮົາພາຍ ເຮືອເຮົາແຊມພັກປູມຂໍ້ເຫລົ້າ
　　　ພາຍຜ່ອງເຊີ້ງ ລາງເຊີ້ງຜ່ອງພາຍ
　　　　ໂອມພຸທໂທມະໂນປລາດ ອິປະລາດເອົາເຫລົ້າເບັ້ນຄຸມ

ການທຳບຸນມີເນົາຈົ່ງມ່ອນ ກໍດົງສ່ອນຕົກອະເວຈີ
　　ປະເພນີຜູ່ເຖົ້າອຸບາດ ພາເຮົາຂາດສີລຂ້ສຸຣາ
　　　ສາທຸສາຍໍມີສຸດສອດ ວ່າແລ້ວຕອກລີນແຜ່ງມາແຖມ
　　　　ເຮືອເຮົາແຊມສຸຣາພາຫງ່ຽງ ຍ້ອນເຖົ້າເກົ່າພາລ້ວຕາມເປີງ

ປາກຖືສີລມືຖືຈອກເຫລົ້າ ລົງເຮືອຊ່ວງຖວາຍພ່ຳຖວາຍແຖມ
　　ຖວາຍມາໂຄພີພູພີຖ້ຳ ພີແມ່ນ້ຳວັງໃຫຍ່ລຳຂອງ
　　　ຮີດສິບສອງຍັງຄອງສິບສີ່ ຮີດພູມີຜູ່ເຖົ້າພາທຳ
　　　　ດີແຕ່ນຳຕາມຫລັງບໍ່ແກ້ ບໍ່ກ້າວພ້າການຊ່ວງເຮືອຍາວ

ບ່າວໄຫເຮືອເມົາແປເມົາແປດ ພາຍແລດ ໆ ຕາມຮີດຕາມຄອງ
　　ຂອງບໍ່ດີສັງຄົມເຊັງຊ່າ ພາກັນຊ້ອງມາເບິ່ງເບັ້ນຝູງ
　　　ຕອນບັ້ນປຸງການເສັງເຮືອຊ່ວງ ໃຫ້ກ້າວລ່ວງສົມພັທນາ
　　　　ເບັ້ນກີລາເຮືອຍາວແຫ່ງຊາດ ບໍ່ແມ່ນຝາດໂຮມຊ່ວງອັນດຽວ

ເຮືອລຳດຽວພາຍເສັງແປດລ່ອງ　ລົມເຫລົ້າແຜ່ງແຮງອ່ອນພໍຕາຍ

ພາຍເຮົາພາຍແຂນລາບ່າງສ່າງ　ພາຍຜ່ອງເຊັ້ງຂໍເຫລົ້າເພີ່ມກິນ

ຫວັງຮາງອັນ (ຊໍ້າ) ບໍ່ພໍກຸ້ມເມື່ອຍ　ໄດ້ແຕ່ຊື່ມີໝ້າມີຕາ

ມີສຸຣາເບັ່ນແຮງຢູ້ຊ່ອຍ　ຕັ້ງແຕ່ນ້ອຍຈົນເຖົ້າຈົນຕາຍ

ເຫັນແຕ່ພາຍຄືເດີມບໍ່ບ່ຽນ　ຍາກແລະຫຍຸ້ງແບບນີ້ຄູ່ປີ

ໂອເຮົາໂອ　ເອົ້າໂອ່ເຮົາໂອ　ປິດແລ້ວສ່ອງເບິ່ງຫຍຸ້ງປານໃໝ

ພາຍເຮົາພາຍ　ສິພາຍເຮົາພາຍ

*ຍາມນີ້ແມ່ນຍາມບຸນກະຖິນ...* ເພິ່ນເທິ່ກັນຕວ່າພີ່ນ້ອງລາວເຮົາກໍ... ເທິ່ເຮັດກອງກະຖິນອອດອ້າງກັນ ໃຜເປັນເຈົ້າພາບກະຢາກຍິ່ງໃຫຍ່ ກະຢາກໄດ້ໜ້າ... ເວົ້າແນວນີ້ບໍ່ແມ່ນອິດສາຕາຮ້ອນ ທີ່ໂຕບໍ່ມີເງິນເຮັດບຸນເອົາໜ້າອອດໂລກຄືເພິ່ນພິສັງ ດອກ ແຕ່ວ່າເວົ້າ... ຈຳໃຈເວົ້າຍ້ອນຄິດສົມເພດເວທນານຳຄວາມໂງ່ຄວາມຫລົງຜິດ ຄິດບໍ່ຖືກຂອງເພື່ອນມະນຸດ...

ກະຖິນຕາມທີ່ອະທິບາຍໄວ້ໃນກອນບົດຕໍ່ໄປນີ້ ໃຜຍັງບໍ່ເຊື່ອລອງໄປລຽບລຽງຄຽງຖາມນຳພຣະພິກຂຸ (ບໍ່ແມ່ນປັ້ງປາແດກ) ຕົນຮູ້ແຈ້ງແລ້ວເບິ່ງກໍໄດ້... ຮັບຮອງວ່າເປັນສຽງດຽວກັນອອດຫລອດ ພຣະອົງໃດວ່າບໍ່ແມ່ນມີມົນສິກໄດ້ໂລດ ບອກເພິ່ນວ່າສິກມາຖຽງກັນກັບປາໄນວ່າຊັ້ນດອກ... ອັນຊິໃຫ້ປາໄນແຖຫົວບອດໄປຖຽງກັບເພິ່ນນີ້ *ບອກວ່າ "ຍາກ" ກະແລ້ວກັນ*



24/VII
ຫ້າມຈຳໜ່າຍ

# ກະຖິນໃບຫາງທີ່ຖືກແທ້

[ຈາກຄໍາກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ 30 ຕຸລາ 1970]

☆ ອອກພັນສາລາພຣະເຈົ້າ   ເຖິງຂອບການກະຖິນ
ແຈກຢາຍໃບດີກາ   ບອກບຸນແຊວຊ້ອງ
ສາມັກຄີສ້າງ   ກະຖິນເທທານທອດ
ຕາມທາງພຸທເຈົ້າ   ຖາງໄວ້ສືບໄປ   ບໍ່ຢ່າແລ້ວ

☆ ກະຖິນກໍາເນີດດ້ອຍ   ການກອບສັງຄະກິຈ
ເດີມແຕ່ຄໍາບູຮານ   ກ່າວມາມີໄວ້
ປາງນັ້ນການສົມສ້າງ   ໃນສົງຄ໌ລໍາບາກ
ພຣະຕ້ອງຫາແຜ່ນຜ້າ   ມາສ້ານຕໍ່ກັນ   ອ່ານາ

☆ ການແຊ່ວຫຍິບຕໍ່ຜ້າ   ຮຽກວ່າການກະຖິນ
ມີສະດຶງວາງຂຶງ   ເດັ່ງຕຶງຜືນຜ້າ
ຜືນຍ່ອມຍັງຜືນນ້ອຍ   ຫຍິບດິນດົ້ນສືບ
ບໍຣະບອມຈຸ່ມຍ້ອມ   ຢາງໄມ້ຊູບລີ

☆ ຜ້າທີ່ຫຍິບຍ້ອມແລ້ວ   ນັ້ນເຮົາຮຽກວ່າ "ຈີວອນ"
ໃຊ້ຫົ່ມຄຸມສັງຂານ   ແຫ່ງສັງຄະນາເຈົ້າ
ຖັດນັ້ນ   ຊົນຊາວບ້ານ   ຜູ່ບໍາຣຸງພຸທສາສນ໌
ກໍຈຶ່ງ   ລົງແຂກເຕົ້າ   ຫຍິບຍ້ອມຊ່ອຍສົງຄ໌   ແທ້ແລ້ວ

☆ ໂດຍດັ່ງເຣື້ອງ   ເບັ່ນຣິດປົນນິບັດ
ຊົນຊາວພຸທ   ທອດກະຖິນຖວາຍເຈົ້າ
ສົງຄະຈຳສິລພົ້ນ   ພັນສາຜ້າຂາດ
ກໍ່ຈຶ່ງໄດ້ໃໝ່ແມ້ງ   ມາໄວ້ບໍ່ຮຽນຜິນ

☆ "ກະຖິນ" ມິທ່ເອົ້າ   ວິພາກສາທົກ   ນີ້ແລ້ວ
ທ່ແຕ່   ນ່ຳຈິອອນ   ນອບເອນເຄນໃຫ້
ກາລຍາມຍ້າຍ   ຫລາຍປີດຸງດອບ
ຄອງຣິດຮອຍທີ່ປັ້ນ   ກະຖິນຂຶ້ນໃຫ້ໃຫຍ່ໂຕ

☆ ຍ້ອນຄົນ   ມັກອອດອ້າງ   ຄວາມມັ່ງມີສຸກ
ອອດຊັບ – ສິນກິນທານ   ທ່ານຜູ້ດີມີໜ້າ
ເລີຍຈັບ   ຈອງທວງທ້າມ   ສິດທິການກະຖິນທອດ
ມີເສບ   ງັນມ່ວນຫລື້ນ   ກິນເຫລົ້າເຮັດບຸນ

☆ ການກະ–ຖິນທຸກມື້ (ນີ້)   ມີຫລາກຫລາຍສະຖານ
ຖ້ານນຶ່ງ   ໂດຍສັດທາ   ສ່ອງໃສໄຕຣແກ້ວ
ຖ້ານນຶ່ງ   ຫວັງມີໜ້າ   ກອງບຸນປະລົງອອດ
ລາງຜ່ອງ   ຫວັງບ່າວຮ້ອງ   ຕຽມທ້າງເລືອກຜູ້ແທນ   ກໍ່ມີ

☆ ລາງເລົ່າ   ຄິດໃຄ່ຄ້ອຍ   ແຜງເດດວ່າ "ກູລະ" !
ສາມາດ   ກຸມເທງເຕັກ   ຂູດເກົາ "ຊາວບ້ານ"
ໂຮມຮິບ   ເງິນມາສ້າງ   ກະຖິນກອງກ້ອງສນັ່ນ
ອິດທິ–ພົນບີບບີ້   ໃຫ້ "ຊາວບ້ານ" "ຮ່ອມບຸນ"   ກໍ່ມີ

☆ ລາງເລົ່າ   ຄຶດໃຄ່ໄດ້   ສາວອ່ອນແຄມອັດ

ຢາກແຕ່ງປຸນເບັ່ນໂຫ   ເອກບໍ່ໂຫມມັ້ນມິແລ້ວ

ເອົາກະ – ຖຶນບັງໝ້າ   ຫາເມັຽປາຍປີກ

ແປງທາງຫຽວສູ່ບ້ານ   ເມັຽນ້ອຍທອດກະຖິນ

☆ ບ້ານໃດ "ຍາ" ເພິ່ນສ້າງ   ກະຖິນທອດກໍ່ບຸນຫົວ   ພີ່ນ້ອງແລ້ວ

ສັ່ງຣົດ (ດຸດຂອງຫລວງ) ມາແປງບໍ່ດ   ກວາດຖຸມົນທາງເຂົ້າ

ເອົາຊ່າງ   ຫລວງມາສ້ອມ   ສາລາທໍ່ແຈກ

ສາຣະພັດສັ່ງຊີ້   ມິໝ້າຊ້າວ່າ "ໂຕ" ທ່ານເອີຍ !

☆ ອັນທີ່   ຖືກແລະແທ້   ໃນແງ່ການກະຖິນ

ບໍ່ໃຊ່   ຫາໝໍ່ລໍາ   ພາພຍົນ ເພງ–ຮ້ອງ

ບໍ່ໃຊ່   ຫາເງິນລ້ານ   ເງິນກຶມາອອດ   ໃດມັ້ນ

ມີທໍ່   ຫຍິບແຊ່ວຍ້ອມ   ຜີນຜ້າທອດຖວາຍ   ທ່ານມາ !

*ຫົວລົມໜາວ* ກຳລັງພັດມາເນີບ ໆ ເບັ່ນຕາຈິດວໍ່ໃຈອອນເອົາພິລຶກ ພາໃຫ້ໃຈຄຶກຄັກມັກຜູ້ສາວ ຢາກຫາຜ້າຫົ່ມກາຄົນມາໄວ້ອຸ່ນເຮືອນ ກະເລີຍເຊາະຊອກ ດົ້ນຫາໝາຕາຍ ວ່າຊິໝາຍຕາໃຜໄວ້ຈັກຄົນ...

ເບິ່ງໄປເບິ່ງມາ ບູ໊! ໃຈຊິຂາດ ຕ້ອງໄປສງົບສະຕິອາຣົມຢູ່ແຖວ ໆ ບໍ່າກ້ອຍ ຈົ່ງພົ້ນຜ່ານຕະດິ້ມຂຶ້ນມາໄດ້ຢ່າງປາຕິຫານ ເລີຍຢາກເຕືອນ ໆ ສາວລາວເຮົາໄວ້ຈັກ ໜ້ອຍພໍ່ງາມ ໃຜບໍ່ເຊື່ອກະເຊີນ ຄັນບໍ່ຟ້ານຖືກ....ນະ ! !

ເຊີນ.... ເຊີນຍານາງມຸ່ງຊູດອັດເກີດກະໄດ້ ຄັນບໍ່ດູຕົນຫົວອົກຄົນບໍ່ມີຄູ່ຊ້ອນ ຖນອນໄວ້ *ຄ້າອອກແຮງ*....



# ຣຽນວອບ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ່ 15 ພຶສຈິກາ 1970]

★ ອັນເວົ້າ ເຣື່ອງສົ້ນສັ້ນ ສມັຍໃໝ່ຂອງມອນສາວ
ກໍຫາກ ເກີນພໍດີ ລວດຈິດຸງກະໂມນກົ້ນ
ຊາຫຍັງມໍ່ ແດ່ຂາໂຕ້ ຂາວງາມ ໆ ເກືອບຮອດງ່າມ
ແດ່ງ່າ ຂາມງ່າມເດົ້າ ບໍ່ເດືອງຮ້ອນ–ບໍ່ຫ່ອນໜາວ
★ ມັ້ນແມ່ນ ສາວສ່ຳນ້ອຍ ຊາດອື່ນໃນລາວ
ສາວລາວເຮົາ ທີ່ແປນຂາ ແມ່ນວ່າມີກໍມີໜ້ອຍ
ດີຜູ້ສາວ ໂຮງຮຽນຈ້າງ ທີ່ສັງຄົມຂ້ອນຢາກແກ່
ພາໃຫ້ ບ່າວສ່ຳເຣື້ອ ຫົວໃຈເຕັ້ນຢູ່ໂຕ່ງໂຕນ
★ ຊາຍກໍ່ ບໍ່ຢາກເວົ້າ ແຕ່ມັນບາດກະຕາຊາຍ
ຫາກອຸ່ນ ແປນແຕ່ພໍງາມ ພີ່ບໍ່ພານຫານເວົ້າ
ເຊົາເສັຽ ເຍີນົງຫລ້າ ສາວລາວນ້ອງຢ່າແລ່ນ
ນຳແບບ ສາວຕ່າງດ້າວ ທີ່ຍັງໄຮ້ຮີດຄອງ
★ ເຂົາມັ້ນ ຍືນຢູ່ດ້ວຍ ແຕ່ພໍສືບຊີວິດ
ໄປ່ດະນິງນຳສັງ ທໍ່ແຕ່ກິນແລະເຣີງຫລິ້ນ
ຈິດໃຈ ເອີນເມີນຂ້າມ ສິລທັມ–ມາຣະຍາດ
ນົກມຸ່ນ ເມົາແລະມົ້ວ ບໍ່ມີຮຸ່ງເຮືອງ ແທ້ແລ້ວ
★ ພວກສ່ຳເຊື້ອ ນ້ອຍໜຸ່ມຊູມສາວ ລາວເອີຍ
ຮຽນຢາກ ວອນວຽນຈາ ຈ່ອງໃຈຊູມເຈົ້າ
ຈົ່ງເບັ້ນລາວ ຢ່າລືມເຊື້ອ ສົນລາວລ້ຳປະເສີດ
ຄອງຮີດ ຢ່າແບ່ນ້າງ ໃຫ້ແພງໄວ້ຊົ່ວການ ພີ່ທ້ອນ

ເວລາຍ້າຍໃກ້ໝົດປີສາກົນ 1970 ເຂົ້າມາທໍ່ໃດ ຜາກົດວ່າບ້ານເມືອງຂອດຂ້ຽວເຂົ້າຊູ່ມ ພີ່ນ້ອງຊາວນາພວກໄດ້ເຂົ້າໄດ້ນ້ຳ–ກະວ່າເຂົ້າໃໝ່ປານັ້ນເນາະ ຊີວິດຈິດໃຈດຸງຊິໄດ້ມ່ວນຊື່ນຍິນຊະອອນ ຊິໃດໄດ້ມາເຮົາເຮັດ ເຂົ້າສານຊ້ຳເບັ່ນຂອງເຈັກ ຢາສູບລາວເຮົາປູກ ຍາມເບັ່ນຊອງແລ້ວຊ້ຳແມ່ນເຈັກຂາຍ ຂ່າວຄະດີຂົ້ມຂືນກຸມປ້ຳທຳອະນາຈານປະເພດຮຽງດິວ–ລົງແຂກກໍ່ຜາກົດວ່າໝາຫູ... ເອົາກັນໃຫ້ອຸ້ມປ່ານໝໍ້ຂີ້ຂວ້າເອົາໂລດ

ບາດແລ້ວຍັງຕ້ອງມາເສົ້າໃຈນຳທີ່ສຸດແຫ່ງຊີວິດ ຂອງນີ້ລາງຍາອູ່ຄຳ ພົມວົງ–ສາ ອີກ ເຖິງແມ່ນວ່າໂຕເຮົາຈະນັບຖືທ່ານຜູ້ນັ້ນຢູ່ແດ່ ໃນຖານະທີ່ທ່ານເບັ່ນນັກປະວັດສາດນັກອັກສອນສາດ ແບບທີ່ດີກວ່າບໍ່ມີເສັ້ງເລີຍ ກໍ່ຍັງອດເສັ້ງດາຍບໍ່ໄດ້ ກອນກໍ່ເລີຍອອກມາແບບບໍ່ມີເຂັ້ມເອົາຊື່ ໆ....

# ແ ບ ວ ຄິ ດ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ່ 15 ທັນວາ 1970]

■ ຄຶດຢາກ ມຸດມອດມ້ວຍ ມ້ອຍລະແມ່ງເປັນຜີ
ເປີດພ່າຍ ໃນຊີວິດ ເກີດຊາດດຽວ *"ເປັນລາວຈ້ອຍ"*
ທີ່ເປີດ ຫລາຍຍ້ອນລາວນີ້ ມີແກວມາລ້າລ່ອງ
ເສືອກແຊກ–ແຊງລ່ອງລ້າ ແດນດ້າວດ່ານລາວ

■ ຫວນວ່າ ຄຶດຕໍ່ກ້າ ການເສຖຖາກິດ
ຊ້ຳແທ່ງ ຮຸນແຮງເຕັກ ຕ່ຳຕອຍຕ່ຳຕ້ອຍ
ເຈັກທາກ ຈອງເປັນເຈົ້າ ກິນບີ້ນ້ອງພີ່ ພຸດໂທແລ້ວ
ຄ້າຈິດປິດຈີ່ປີ່ ມີແຕ່ເຈັກອ້ອຍຕ້ອຍ ໂກຍກູ້ກອບກຳໄຣ

■ ຫລິງທີ່ ເຢົາວະຊາດເຊື້ອ ຊົນໜຸ່ມຊູມສາວ
ດີທໍ່ ເມົາມົວຫລົງ ກິເລດການການຮ້າຍ
ສັງຄົມບ້ຽວ ເປັນສັງໂຄມຄະໂຍມກອດ
ເປີດພ່າຍ ແໜງແທ່ງພ້ ເລີງເລື້ອຍເມື່ອຍກະໃຈ

■ ກິນ–ນ່ອນ–ມົວ–ທ່ຽວ–ລົ້ວ ເພີ່ນໂຮມຮຽກວ່າສັງຄົມ ວ່າລື
ຫລອກສາວ ໄປກຸມຂືນ ຂົ່ມໃຈວ່າຕົວໂກ້
ທ່າຊ່າງ ຫາບໍ່ພານພ້ ພອກອັບປີຫີນະຊາດ
ບາດວ່າ *"ຢາອູ່ຄຳ"* ທຳແຕ່ດີຕລອດເລື້ອຍ ລືເຈົ້າບໍ່ຈັ່ງຢອມ !!

*ມື້ນີ້* (ຕອນແຕ່ງກອນ) ໄປຟັ່ງເທດຟັ່ງທັມມາຈາກວັດໂສກປ່າຫລວງ ກໍ່ເລີຍປ່ອຍຈິດໃຫ້ແລ່ນໄປນຳກະແສຂອງເມດຕາທັມ ວາງໃຈໃຫ້ເປັນກາງ (ຮັບຮອງບໍ່ປົບຊ້າຍປ່າຍຂວາຄືຂອງໃຜດອກ) ແລ້ວກໍ່ແຕ່ງກອນເຕືອນໃຈເພື່ອນຮ່ວມໂລກເອົາໄວ້ ຮູ້ຢູ່ດອກວ່າຄຳເຕືອນແນວນີ້ຍ່ອມບໍ່ເປັນຜົນໃຫ້ຄົນໂລບລ້ຽວບໍ່ຮຽມໃຈໄດ້ ແຕ່ວ່າ...ຢ່າງໜ້ອຍພວກທີ່ຢູ່ຝ່າຍກົງກັນຂ້າມກັບຄວາມຊົ່ວທັງປວງ ຍ່ອມ ອິ່ມໃຈ–ໜຳໃຈ ແລະໂລ່ງໃຈ ເມື່ອໄດ້ອ່ານບົດກະວີທຳນອງນີ້....ເຊື່ອວ່າຄວາມຄິດນີ້ *ບໍ່ຜິດຄວາມຈິງອີ່ຫລີ*



# ເບົ່າບໍ່ຕາຍ – ເບົາໃບ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບອັນທີ່ 30 ທັນວາ 1970]

● ບັດນີ້ກາລະ   ເລີຍບໍ່ຮຽມປັ້ນ   ປົບແລ່ນເລີງໝູນ   ແລນໍ
ດິດູ່   ຊົລທິພັດ   ພາກໄປໄລຈ້ອຍ
ມິວ່າ   ມິອັນໄດ້ງ   ໄຫລວົນອຽມຄອບ
ມິທີ່   ບຸກບັ້ນຟ້າ   ນອງມ້າໃໝ່ແຖມ   ຖ່າຍມາ

● ແມ່ນວ່າ   ພົລໂລກລ້ອນ   ເລີງເກີດເລີງດັບ   ກໍດີ
ກໍໃບ່   ວົນອຽມກັບ   ເກີດດິນດົງເຊື້ອ
ມາ ໆ ລ້ອນ   ສັພການກົງໂລກ   ເຮົານີ້
ມິທ່ອນ   ຍືນຢູ່ຍັ້ງ   ສເມີຟ້າເກົ່ງດິນ   ດອກມາ

● ທຸກສ່ຳຖ້ອນ   ຕ້ອງດັບແຈບຊີວິດ
ລືທ່ອນ   ມີຂືນຂັດ   ເດຊຍົມບານໄດ້
ແມ່ນວ່າ   ມີເງິນລ້ານ   ຫລາຍກືກໍມີລອດ
ຊ່າວ່າ   ພິຫລິກມັ້ນ   ຕາຍໄດ້ຮ່ອນໃດ

● ແມ່ນຈັກ   ເສີມສົ່ງສ້າງ   ອຳນາດເຮືອງຍົດ   ກໍດີ
ແມ່ນວ່າ   ໂກງກິນຫລວງ   ໂລບພາງຊາວບ້ານ
ແມ່ນຈັກ   ອົມອຳໄວ້   ພາສີເບັ້ຽສ່ວຍ   ກໍດີ
ຊ່າວ່າ   ຍືນຢູ່ຄ້ຳ   ຂາງຟ້າເມື່ອໃດ   ທ່ານເອີຍ

● ເຫັນທີ່ ມຸດມິ່ງມ້ອນ ມອຮມອດມີເຫລືອ

ໃຜວ່າ ຄົນມີເງິນ ຢູ່ຍືນດຸງຟ້າ

ຕອນທີ່ ສັງອອນໄວ້ ກັມມັງອັນປະກອບ

ກັມດີ–ຊູຊັກໃຫ້ ສະກຸນເຈົ້າບໍ່ເນົ່າເໝັນ

● ພອກທີ່ ໃຈຫຍາບຊ້າ ບັງບຽດຊີວິດ ທ່ານມັ້ນ

ເນົ່າບໍ່ຕາຍ ກໍເຄີຍເຫັນ ເອື້ນເນົ່າໃນສະເອືອນຮ້າຍ

ແມ່ນວ່າ ພົງພັນເຊື້ອ ສັງຄົມກໍຮັງກຽດ

ສາບແຊ່ງ ຊື້ງຂຟ້າ ປະຈານຊື້ຊິຊິເສັຽ ບໍ່ຢ່າແລ້ວ

24/VII
ห้ามจำหน่าย

*ກ່ອນແຕ່ງກອນນີ້* ບໍ່ພໍເດືອນດັກເຫັນຊິໄດ້ ມີປະກາດທາງໜ້າໜັງສືພິມຫລາຍ (ໝົດທຸກ ໆ) ສະບັບ ກ່ຽວກັບພຣະຣາຊໂອງການຫ້າມຂ້າສັດພາຫານະ (ມີງົວ–ຄວາຍ–ມ້າ–ຊ້າງ ເປັ່ນຕົ້ນ) ຊຶ່ງອາຍຸຕ່ຳກວ່າສາມປີ ສຳລັບໂຕຜູ້ ແລະໂຕແມ່ມັນໃຫ້ຂ້າໄດ້ເມື່ອຮູ້ວ່າເປັ່ນແມ່ໝັນ (ກະຊວງເສຖກິດເປັ່ນຜູ່ປະກາດ)

ຕໍ່ມາບໍ່ພໍສອງອາທິດກໍມີຂ່າວສັງຄົມຄຶກໂຄມ ວ່າຈະມີຣາຍການກິນງົວນ້ອຍປິ່ນຕັ້ງມະໂຫລານຢູ່ອຸທິຍານນອກເມືອງ ຂອງຜູ່ມີອິດທິພົນກຸ່ມນຶ່ງ (ເກືອບໝົດເມືອງ) ຂ່າວທີ່ແນ່ນອນວ່າປະທານກິນງົວນ້ອຍປິ່ນເຍີ້ຍພຣະຣາຊໂອງການນີ້ ແມ່ນເສນາບໍດີຍຸຕິທັມໃນສມັຍນັ້ນ ໂດຍມີເສນາບໍດີເສຖກິດອອກແຮງນຳຢ່າງພ້ອມພຽງຮຽງໜ້າ... ໜ້າເຮົາກໍເລີຍອາຍຈີນແດງ.... ອາຍຕາງເພິ່ນທີ່ບໍ່ອ່ານປະກາດສະບັບນັ້ນ ຫລືເພິ່ນອ່ານໂຕລາວບໍ່ເປັ່ນ *ກໍຂໍໂທດ*

# ບູ ນ ວ ກ ກິ ບ ຟ າ ບ

[ຈາກຄຳກອນຊູດ "ກະວິຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບອັນທີ່ 15 ມັກຣາ 1971]

▲ ມີພຣະຣາຊອາຊຍ໌ຫ້າມ ປັ້ງປິ່ນດາວິໂຍ
ເສຖ–ກົມການກິຈ ກ່າວຖແລງກໍເລີງເລື້ອຍ
ບອກວ່າໃຜຂືນຂ້າ ດາວິນ້ອຍໜຸ່ມ
ຍັງໄບ່ສາມຂອບໄດ້ ຊິຕໍາຕ້ອງໂທສທັນທ໌ ບໍ່ຍ່າແລ້ວ

▲ ອາຊຍ໌ມັ້ນໝາຍສັ່ງໃຫ້ ເສຖພາດຍໍຍົກ
ເຣື້ອງຣຸ່ງເຣືອງ ໆ ຣົດ ກໍຈຶ່ງທອງແທນໄວ້
ແມ້ງວ່າກາລໝາຍໜ້າ ປາ–ປູທາກເຂີນຂາດ
ງົວຄວາຍຈັບປິ່ນແປ້ ກິນເຫລົ້າບໍ່ໃຊ່ການ ແທ້ດາຍ

▲ ອັນພຣະ – ຣາຊອາຊຍ໌ຕັ້ງ ການຄາຕພາຫານສັຕວ໌ ດັ່ງນັ້ນ
ຄວນທີ່ ຊົນລາວພັກດ໌ ເຊື່ອພັ້ງເກງຍ້ານ
ກອຍໃຈເວັ້ນ ກັມມັງອັນມີຊອບ ລີ້ມັ້ນ
ອົດຍອມ ທອມຣິບໄດ້ ເມືອໜ້າຊາດຈເຣີນ ແທ້ແລ້ວ

▲ ເດຊະ ຣາຊອາຊຍ໌ຕັ້ງ ປັ້ງປິ່ນດາວິໂຍ ດັ່ງນັ້ນ
ຣາສ – ສູຣາແຊມ ຊ້າມ່ອນເມົາເຜົາແກ້ມ
ອອກຂ່າວ ໂຄມ ໆ ອ້າງ ເຊີນກິນງົວ (ນ້ອຍ) ປິ່ນ
ລີທ່ອນ ອາຍ "ໄພ່ບ້ານ" ຜູ້ກິນເຂົ້າບ່າຍເກືອ ທ່ານເອີຍ

▲ ຊຸມນີ້ ຮູ້ທ່ຮູ້ ວ່າຜິດຣາຊອາຊ໌ຍາ

    ທໍ່ແຕ່ ທຳເນີນເສັຽ ເຣັດ "ພວກກິນຟານ" ໄວ້

        ຂໍຢ່າ ໂມທັງດ້ອຍ "ກິນປູນ–ປູນແສບ" ມັ້ນທ້ອນ

(ມາດແມ່ນໃຜກິນປູນ) ຂໍພໍ່ ຢ່າດ່ວນຮ້ອນ ໃນທ້ອງແລ້ວທ່ຽວພາລ ຜູ້ອື່ນເນີ !

▲ ໂຜດຢ່າ ແຜງເດຊກ້າ ກຸມບີບເທງເຕັກ ໄພ່ເນີ

    ອັນທີ່ ກອນກອຍຂານ ກໍດັ່ງແຍງເງົາແກ້ວ

        "ສຽງ" ຊາວບ້ານ ພາທີສີປາກ ມານີ້

            ກໍເພື່ອ ເບັ່ນແອ່ນໄວ້ ແຍງຮູ້ອຳນາດຊຸມ ດອກນາ

*ໃກ້ໆຈິຣອດຕຣຸດສົງການ* ປີ 2513 ຕໍ່ 2514 (ຊຶ່ງມີລາງຄົນທີ່ຫຼອໄປຝັ່ງມັ້ນເລື້ອຍໂພດ ຫລັງປີເບັ່ນ 2514 ຕັ້ງແຕ່ເດືອນມົກຣາ 2513 ມາກໍ່ຫລາຍ ຈົນເບັ່ນຕາໜ່າຍ) ນີ້ບ້ານເຮົາ – ເມືອງ (ໃຜກໍໄດ້ທີ່ເບັ່ນນາຍ) ເຮົາ ມີເຣື່ອງຮ້ອນ ໆ ຫລາຍອັນພັນສິ່ງ....

ລອງ ໆ ອ່ານເບິ່ງກອນຫວາຍເທດປີກຸນໃນໂອກາດຈໍ່ຕໍ່ກຸນລອງເບິ່ງ ຊິດີຄວາມອ້າຍຊຽງປາໄມອ່າບໍ່... ເຖິງຢ່າງພ້ອຍກໍ່ມີເຣື່ອງໝູນີ້ງລະ *ທີ່ບໍ່ຜິດຄວາມຫວາຍ...*

# ຫວາຍເຫດປີກຸບ

[ຈາກຄຳກອນຊູດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບອັນທີ່ 15 ເມສາ 1971]

▼ ຂອບປີກຸມ ຄະລາດເຂົ້າ ກໍພ້ຳເກົ່າເຮົາມີລະ
ຈ່າວ່າ ມິເຫໂວ ບໍ່ຽມດິນແປງພ້ຳ
ຕ່າງແຕ່ ແກວກາຍຂ້າມ ອານາພູມປະເທດ
(ເສິກມາຈາກຝ່າຍເໜືອ) ເສືອມາ ຈາກຝ່າຍໃຕ້ ໄຫລເຂົ້າຍ່ອງຍີ

▼ ມັນແມ່ນ ເຫດແຫ່ງເບື້ອງ ຈໍຈາກ–ກຸມແຖມ
ກ່ອນແຕ່ ນາງສົງການ ຊິຂີໝູມາພີ້
ຂ່າວວ່າ ໝູໝາຍບ້ຽວ ພາລີຫລົບຫລີກ
ຫລອຍມາ ຈາກຝັ່ງພຸ້ນ ປອມປົ້ນບໍ່ຽມທະບຽນ ວ່າລີ

▼ ນາງສົງການ ບໍ່ມຸ່ງສົ້ນ ດີເກົ່າເມືອຫລັງ ພີ່ນ້ອງເອີຍ
ຈາກ "ມິນີ" [Mini] ເປັ່ນ "ໄມໂຄຣ" [Micro] ສະເກີຣ໌ດເຂີນຈຳກົ້ມ
ມືຂວາ ກຳຍັງບ້ອງ ລວງປອງບໍ້ອງໄລ່
ດ້ອງຂອດ ກຸມກອດກ້ຽວ ໄດ້ເປັ່ນນ້ອຍນັ້ງສະບາຍ

▼ ມືຊ້າຍ ຊູເຊີດເຈ້ຽ ກະດາດສັນຍາ
ຄ້າຊ່ອຍ ຄວາມເປັ່ນກາງ ທີ່ຈ່ອຍເຫລືອງພຽງກ້າງ
ກ–າງ ກາງ –້ ກ້າງ ຍີ້ມຍິ່ມຈົມປາກຜ່າວ
ກາງຂອງ ລາວເກືອບລົ້ມ ຫລົງຫລົ້ມຫລົ່ມຫລວງ

▼ ສັງຂານ ທັດດອກໄມ້ ສີສລາກລອຍລັດ

ຜັທ–ມາສາມເດືອນ ລ່ອຍຂາເລີຍເຊົາກ້າວ

ທວາຍອ່າ ການເງີນກູ້ ສິນຍືມເຈ້ງກະລ່າງ

ພອກນາຍທຶນ ຊິຈຸ່ມຫລົ້ມ ຈົມຕົ້ນອອດອາຍ

▼ ປີນີ້ ມາກຫລົ້ມມ້າ ຢູ່ກ້າຜ່າຍເຊໂປນ

ຫລົ້ມມ່ອນ ຊູລມມຸດກັ ເລືອດນອງພອງມ້າ

ທວາຍອ່າ ປີກຸນເຂົ້າ ຝົນຣວາຍຣວາດອຸບາດ

ປາຈັກ ຕາຍດອບມ້າ ນອງລົ້ມບອກພອງ ແທ້ແລ້ວ

▼ ຝົນຫລັ່ງລົງຈາກຟ້າ ພັນຣ່າຣອມໝົດ

ຕົກຢູ່ດອງຈັນທຣາ ເດິ່ງພັນກັບສາມຣ້ອຍ (800 ທ່າ)

ຣ້ອຍນຶ່ງຣວາຍຣ່າດ້າວ ດົງຫລວງມ້າງມຸ່ນ (ຝົນ B. 52)

ຣ້ອຍນຶ່ງຕັ້ງຕໍ່ຣ່າຣວາດມ້າ ບັກລາຍລົ້ມລວາດຖຸມົນ

▼ ທວາຍອ່າເຂົ້າແລະມ້າ ອຶດຢາກແຕ່ລົມທຸກ

ດົນຮັ່ງກິນຈົນເຫລືອ ເພື່ອໝາກາງບ້ານ

ການປາບປາມນາງຈ້າງ ໝໍທວາຍບໍ່ທານບອກ

ຈັບສອງມາຕື່ມທ້າ (ຍ້ານ) ລາມລົ້ງປາບບໍ່ລົງ ບໍ່ຢ່າແລ້ວ

*ເພື່ອຫາເສຽງ* ໄປຜູ່ແທນເທສບານກັນແບບລາວ ໆ ແດ່ ແບບຕ່າງ ໆ ບໍ່ຄືລາວປານໃດແດ່ ແລ້ວເພິ່ນກໍໄດ້ເປັ່ນຜູ່ແທນກັນສົມໃຈແດ່ ສ່ວນທີ່ເຫລືອແດ່ກໍບໍ່ໄດ້ເປັ່ນ

ຜູ່ໄດ້ເປັ່ນນັ້ນໜ້າເກົ່າກໍຫລາຍ (ໜ້ອຍນຶ່ງ) ໜ້າໃໝ່ກໍມີຕອນໂຄສະນາວ່າ ຍອດອ້າງໂດງການອ່ອຍເຫຍື່ອກັນ ປານວ່າຊິເນຣະມິດບ້ານເມືອງໃຫ້ເປັນສວັນຂຶ້ນມາ ໃນອະຍັນທັນຕານີ້ເອົາໂລດ ຜູ່ໄດ້ເປັນແລ້ວກໍເຂົ້າທຳນອງແບບວ່າ ຜູ່ລາງຄົນເພິ່ນເປັນເຊື້ອຜູ່ໃຫຍ່ເຈົ້າຂຸນມູນນາຍຢູ່ຖ່າງກິນສະບາຍບໍ່ອຶດບໍ່ຢາກ ຣາສດອນທຸກຍາກເພິ່ນບໍ່ເຄີຍເຫັນ ນັບແຕ່ນີ້ເພິ່ນເປັນຜູ່ແທນ "ມິດງຽບ"

ອັນນີ້ວ່າຜູ່ແທນຊຸດແລ້ວ ໆ ມາພຸ້ນດອກ.... ທີ່ແລ້ວ ໆ ມາເຫັນເປັນຄືວ່ານີ້ ອິຫລີ.... ຫລືວ່າຊຸດເລືອກໃໝ່ນີ້ບຸ໊ ເດີ... *ຍັງວ່າບໍ່ຈ່າງ*...



# ວ່າ... ຜູ່ແທນຊຸດກ່ອນພຸ້ນດອກ

[ຈາກຄຳກອນຊຸດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບອັນທີ 15 ພຶສພາ 1971]

△ ຫາມຜີ ຕົກບ່າຊ້ຳ ບໍ່ຈູດຈີ່ກໍດັງຝັງ
(ຕົກກະເທີນ) ວ່າໄດ້ເປັນສະມາຊິກ ຮ່ອມປະຊຸມກຳແພງບ້ານ
ແມ່ນບໍ່ມີທາງສູ້ ແຊວສຽງຕາງຣາດ (ສ)
ກໍຄຸງຫາຮ່ອມສູ້ ພໍໄດ້ໃສ່ຖົງ–ຕື່ມແລ້ວ

△ ເຣື່ອງຫຍັງຊິບໍ່ສູ້ ໃນເມື່ອໃຈສມັກ
ມັກຈຶ່ງມາອາສາ ຍາດຊິງຈົນໄດ້ (ນັ່ງຕັ່ງຜູ່ແທນຕາມອາດ)
ເປັນຜູ່ແທນແລ້ວ ຕ້ອງໂກຍທຶນທີ່ເຄີຍຖອກ
ຖອນຖອດຄືນເພື່ອໄວ້ ສມັຍໜ້າຊອກສຽງ

△ ຖອດທຶນ ແລ້ວບໍ່ແລ້ວ ຕ້ອງຫາ "ເສດ" ຕາມຫລັກ
ຊື່ວ່າ ທັມມະດາສັດ (ຕວ໌) ເມື່ອໂລບຫລົງຕ້ອງມີ "ບ້ຽວ"
ເຣື່ອງຜູ່ແທນ ແສນເສົ້າ ມີມາສັນກ່າວ
ຍ້ອນຜູ່ແທນມັກແທ້ນ ເມືອງບ້ານຈຶ່ງບໍ່ບານ ທ່ານເອີຍ

△ (ທີ່ເວົ້າມາເທີງນີ້ແມ່ນ) ຜູ່ແທນຊຸດກ່ອນພຸ້ນ ດອກວ່າມ່ານາຍເອີຍ
ບໍ່ໄດ້ລອນລາມສີ–ສຽດຜູ່ແທນສມັຍນີ້
ພວກຜູ່ແທນສມັຍນີ້ ຂໍຊອນຊ້ອນເບິ່ງກ່ອນ
ຫາກບໍ່ແປງແຕ່ງສ້າງ ສມັຍໜ້າຊິດ່າເອງ

*ຢູ່ບ້ານເຮົາເມືອງເຮົາ* ໂດຍຈຳເພາະວຽງຈັນຫນ່ມະຄອນຫລວງນີ້ແຫລະ ຄັກກວ່າໝູ່ ທີ່ວ່າຄັກກວ່າເມືອງອື່ນ ໆ ໃນປະເທດສິບແສນຊ້າງນີ້ ກໍຍ້ອນວ່າຢູ່ກາງວຽງນີ້ມີຄົນຫລາຍ ຣົດຫລາຍ ທາງຫລາຍ ຝຸ່ນຫລາຍ ຂີ້ຕົມຫລາຍ ບອກຫລຸມນ້ຳຖມົນຫົນທາງກໍຫລາຍ ນາຍກໍຫລາຍ ແຕ່ຜູ້ເຮັດວຽກບໍ່ຫລາຍ ມັນໄປຫລາຍຢູ່ຜູ້ກິນ

ກິນທີ່ເວົ້ານີ້ບໍ່ແມ່ນກິນທັມມະດາຄືພວກຂ້າຣາຊການ ດອດອອກໄປນັ່ງກິນເຝີເຮັດພ້າບານໃນໂມງເຮັດວຽກ (ຂ້າຣາຊການແມ່ຍິງໄປຕລາດກັບເມືອເຮືອນຄົວກິນຖ້າຜົວແລ້ວຄ່ອຍຄືນເມືອການກໍມີ)

ກິນທີ່ເວົ້ານີ້ມັນຍິ່ງໃຫຍ່ໄພສານມະໂຫລານ ກວ່າການກິນເວລາຣາຊການພ້າບານຕາມຮ້ານເຝີນັ້ນ *ຂື້ນໄປອີກຫລາຍ ໆ ໆ ໆ ໆ ຕ່*



# ໂຄງການກອບໂກຍ

[ຈາກຄຳກອນຈູດ "ກະວີຊາວບ້ານ" ໃນ "ເພື່ອນແກ້ວ" ສະບັບວັນທີ່ 30 ພຶສພາ 1971]

▽ ທາງເປັນຕົນ ບອກວ່າແລ້ງ ແລ້ວຊິແກ່ດິນຖົມ
ຂອບເມື່ອ ຍາມຄົມທັນ ຊ້ຳວ່າເງິນບໍ່ພໍໃຊ້
ແສມແລມລົ້ມ ແປງເປັນປັ້ນບໍ່ຮຽມ
ຫລາຍເທື່ອ ຫລາຍໝ່າຍໝ້າ ປະຊາບ້ອຍທົ່ວວຽງ

▽ ຄອງຈົນ ເລີຍລ່ວງແລ້ງ ຍັງບໍ່ແຕ່ງແປງປັດ
ດິນບໍ່ ມາເຖຖົມ "ແລດຢາງ" ບໍ່ຄອງພໍ
ເງິນບໍ່ ມີພໍໃຊ້ ໂຄງການຄ້າງເຕິ່ງເຍິ່ງ
ເພາະເພື່ອ ຝູງເພື່ອນພ້າວ ໂກງກູ້ກອບໂກຍ ແທ້ແລ້ວ

▽ ວຽກຫລວງ ເດີນບໍ່ໄດ້ ເພື່ອເງິນຂາດໃນງົບ
ງົບລ່ອນຕົວ ຊ້ຳຫລ໊າຍຫລາຍ ແມ່ນເພື່ອນຫາຊິໃດໄດ້ ?
ໄດ້ແຕ່ ໃສມາລ້າງ ວິລລາຫລັງອາດ
ວ່າຂາຍ ມາທົ່ງມ້ອງ ກໍຄຸງໄດ້ບໍ່ຮອດແສນ

▽ ໄຊ່ວ່າ ຮຽມຢາກລົ້ມ ຄວາມເກົ່າແນວເໝັນ
ເຮັດອາດ ລືມຊົງເສີຍ ບໍ່ປະຈານໝັງໝ້າ
ກໍເພື່ອ ພຽມຊອມສົ້ງ ສັນດານໂລບຫລ່າຍ
ສາທຸ ! ສາທຸ ! ໃຜຜູ່ ຄິດໂລບລ້ຽວ ລວງລ້ໃຫ້ທ່າກິນ ແດ່ແມ !

*ແຜ່ນສຽງເພງໄທ* ຫລຸຫລັ່ງເຂົ້າມາເມືອງເຮົາຈົນເປັນຕາໜ່າຍ ຣະຫວ່າງນັ້ນມີໂອກາດໄດ້ໄປທ່ຽວເມືອງອຸດອນ ແລະ (ມີໂອກາດອີກ) ໄດ້ຮູ້ຈັກກັບແມ່ຍິງລາວຢູ່ເມືອງນັ້ນນາງນຶ່ງ ລຽບລຽງຄຽງຖາມໄດ້ຄວາມວ່າ ຜູ່ບ່າວຝັ່ງໄທໄຊ້ເພງ "ຝົນເດືອນຫົກ" ເປັນເຫຍື່ອອອຍໃຈໃຫ້ກະສັນສວາດ ເລີຍຄະລາດແລ່ນນຳເຂົາມາໃຊ້ຊີວິດຄູ່ຢູ່ນຳກັນໄດ້ບໍ່ພໍເດືອນ ໜໍ່ນັກຮ້ອງມີແຜນກໍເລີຍບີບຄັ້ນໃຫ້ໄປໃຊ້ຊີວິດເປັນຄູ່(ນອນ)ຊົ່ວຄາວຂອງພວກ G.I. ຢູ່ເມືອງໝາກແຄ້ງ

ຄວາມຮູ້ທີ່ນີ້ຂ້າພະເຈົ້າໄດ້ມາດ້ວຍຣາຄາ 50 ບາດ ແລະຄິດວ່າບໍ່ແພງເລີຍ ສຳລັບທີ່ຈະມາຖ່າຍທອດບອກເຕືອນໃຫ້ເປັນປໂຍດ ນຳຜູ່ສາວນ້ອຍອັຍຄະນອງໃນບ້ານເມືອງເຮົາ ໃຈແທ້ແລ້ວຢາກໃຫ້ຜູ່ແສ້ຜູ່ສາວພວກຊີຕາຍຈັກດິ້ນຈັກງໍນຳເພງບ້າ ໆ ບໍ່ ໆ *ນັ້ນແຫລະຟັ່ງເປັນດີທີ່ສຸດ*



# ຝົນເດືອນຫົກ

□ ເດືອນຫົກ   ຝົນຫລັ່ງຍ້ອຍ   ຣຳຣວາດສຸທາທອງ

ກົບຂຽດ   ອຶງຄະນຶງສຽງ   ກ່ອນຣະງົມຣະງຳຣ້ອງ

ຂອບເມື່ອ   ຝົນຕົກເທັ້ງ   ທໍຣະນີປຽກຊຸ່ມ

ປູ–ປາ   ຊົມຊື່ນມ້າ   ໃບຫຍ້າກໍ່ປົ່ງຂຽວ

□ ກາຣະດູຂອບເຂົ້າ   ຟ້າໃໝ່ຝົນມາ   ດັ່ງນີ້

ຝູງຊ່ຳຊາວນາເຮົາ   ກໍປູກປຸນແປງສ້າງ

ສັກ [ເຂົ້າ] ໄຮ່ໄຖນາໂຫລ້ງ   ສວນຄົວຮົ້ວແດ່

ໄຖຄາດຕົກແຕ່ງທ້າງ   ດາໄວ້ຊູ່ອັນ

□ ຈັດແຈງໄວ້ໃຫ້ພ້ອມ   ເຂົ້າປູກແນວດີ

ມີລູກສາວຫລານຊາຍ   ກໍຣຽກໂຮມກັນໄວ້

ລູກສາວເຮົາພວມຂົ້ນ   ຮຽນພຍາລົມບ່າວ

ມາດວ່າໄດ້ຄູ່ຊ້ອນ   ຍາມນີ້ກໍຫາກດີ   ບໍ່ຢ່າແລ້ວ

□ ຄັນໄດ້ເຂີຍຊ່າງສ້າງ   ວຽກໄຮ່ການນາ   ກໍດີ

ເຂົ້າໄຮ່ພາ–ເຂົ້ານາຂຽວ   ລູກເຂີຍຄູນຄ້າ

ຢ້ານແຕ່ລູກສາວເຮົາ   ມັນຈັກມີຄູນໜ້າໂຕນນຳເຂົາກ່ອນ

ຖືກອ້າຍບ່າວໄທວຽງມາແກ່ລາກຂົ້ນລົ້ ທຸບຈ້ອງບໍ່ຊ່າງການ   ມັ້ນແລ້ວ

□ ອັນວ່າສາວສ່ຳນ້ອຍ ຍັງອ່ອນຄວາມຄິດ

ເປີດໜ່າຍດິນແດນມາ ບ່າດົງພົງໄມ້

ຢາກຢູ່ວຽງວັງກວ້າງ ແສງສີວິໄລເລີດ

ຍ້ານທີ່ຫລົງເຊື່ອລີ້ນ ລົມແລ້ງເປົ່າແປນ ແທ້ແລ້ວ

□ ພໍ່ແມ່ເກີດອັ້ງເອົ້າ ຍ້ານລູກບໍ່ເອົາຄວາມ

ເກີດນອກໃຈປີຕາ ແຫກກະເຊີນຳຮູ້

ຄັນລູກໄປສຸກດ້ອຍ ດອນກັນກໍແຄນຢູ່ ພຸທໂທແລ້ວ

ແນວວ່າພາລູກພໍ່ໄປແອບສອນເສບຊ້ອນ ພໍ້ລົງແລ້ວບໍ່ຍອມມາ

■ ★ ■

□ ຄຳກອນສຳນວນນີ້ "ທາງກຸດ" ສຸດທີ່ຮຸນແຮງຄົ້ນເທິງຢູ່ນຳ "ເພື່ອນແກ້ວ" ເທິງຢູ່ເຮືອນ ກອງປື້ມ–ຕູ້ໜັງສື (ຄັນຜູ່ປາກເປັນລະວ່າ) ກອງພຽງພູພຽງຜາ ຄົ້ນຫາຈົນອິດອ່ອນ ກໍບໍ່ມີທາງວ່າຊິໄດ້ພໍ້ປາຍຄຳກອນສອງບົດ (ແປດວັກ) ເລີຍຂໍສັ່ງຝາກໄວ້ພ້ອມນີ້ວ່າ ຖ້າໃຜມີທາງ "ຜົນເດືອນຫົກ" ກະຣຸນາໂຜດຜາຍ "ປາໄນ" ແດ່ທ້ອນ !!!

*ຂຽນກອນກ່ຽວກັບມະນຸດມະນາ* ມາກໍຫລາຍແລ້ວ ຈົນຮູ້ສຶກວ່າ ຊິມີຄົນບໍ່ຮັກຢູ່ທົ່ວເມືອງ.... ບັນດານັກປຣາຊອາຈານບູຮານຮານເກົ່າແກ່ ເພິ່ນກໍຄຸງ ຕະພັກດີຄືກັນວ່າ ມະນຸດບໍ່ມັກໃຫ້ມະນຸດວິຈານເຣື່ອງມະນຸດ ເພາະວ່າມັນຜິດໃຈເດືອງ ໃຈມະນຸດ.... ກະບາດກໍມີຄວາມເຫັນແນວນີ້ຄືກັນ ເລີຍຫັນມາຂຽນກາບກອນຂອດ ຂ້ຽວກ່ຽວກັບສັດສາວາສິ່ງລອງເບິ່ງ...

ແຕ່ຄາວເປັນເດັກນ້ອຍຄັນແມ່ໄປຕລາດຊື້ປາໂຕໃຫຍ່ ໆ ມາ ກະບາດຖາມ ຍາມໃດແມ່ບອກວ່າເອົາມາແຕ່ "ໜອງດິນຈີ່" ແມ່ໄປ "ໜອງດິນຈີ່" ນີ້ໃດໄດ້ປາຄໍ່ ໃຫຍ່ປາດຸກໃຫຍ່ມາຮອດມາອ້າງຢູ່ບໍ່ຂາດ... ກະເລີຍຄຶດສລາດຢາກໄປເບິ່ງຊົມໜອງ ຮ່າມັນເປັນປະການໃດຈຶ່ງຄ່ອຍເອີ້ນ "....ດິນຈີ່" ໄຫ້ແອ່ວໄປນຳແມ່ຫລາຍນີ້ຫລາຍ ເຜລາ ຈອມມານດາຈຶ່ງແປນໂອກາດໃຫ້ປາໄນໜູອະນາດປະພາດຊົມໜູ ໄປເບິ່ງປາ ໜອງປລາດ ພໍໄປຮອດຟາດລະແມ່ນຕລາດເຊົ້າເຮົາດີ ໆ ນີ້ເອງ... ຄິດຕິດອົກຕິດ ໃຈຄຳວ່າ "ໜອງດິນຈີ່" ຊຶ່ງໝາຍເຖິງ "ຕລາດ" ນີ້ມາແຕ່ຍັງນ້ອຍ ກໍເລີຍຖືໂອກາດ ສແດງຄວາມຕິດອົກຕິດໃຈອອກມາເປັນກອນເຣື່ອງ "ເຈົ້າຖິ່ມໜອງດິນຈີ່" ນີ້ຈັ່ງໃດລະ ກະເປັນກອນເຣື່ອງໝາ ໆ ຂອງໝາທັງຫລາຍນັ້ນແຫລະ.... *ເຊີນອ່ານເບິ່ງເອົາ ເອງເທາະ !!!*





# ເຈົ້າຖີ່ບໜອງດີບຈໍ່

× ຟັ່ງຍິນ ດິ່ນ ໆ ກ້ອງ ກົງໂລກເຟືອນຟົດ ພຸ້ນເຍີ

ເມໂຄລັດ ເດື່ອນບົນບັງຟ້າ

ພາຍພານຕ້ອງ ຝົນລິນຮ່ຳຮອາດ

ຫລຸຫລັ່ງລົງສູ່ພື້ນ ພະລັນລົ້ນລອາດຖຸມົນ

× ຍາມນັ້ນຮຽມໃຄ່ນ້ອມ ມະໂນນອບນຳຖວາຍ

ຄວາມຈົງຮັກ ພັກດີດາຖ້ອມ

ໃນຄຸນເຈົ້າ ປິຕາຕົນເອກ

ອົງປະສິດປະສາດໃຫ້ ຮຽນຮູ້ຮຸ່ງພຍາ ບໍ່ຍ່ຳແລ້ວ

× ຊື່ວ່າ ກອນກາບຖ້ອຍ ຮຽມແຕ່ງແປງສານ ດັ່ງນີ້

ຍັງໃບ່ ມີນິທານ ເລົ່າຂານຄົນເຮື້ອງ

ຫາກແມ່ນ ຈິນຕະນາແຫ້ ທຳນຽມນາມມັກປາດ

ຣາສບັນດິດ ສືບເຊື້ອ ນອນຄູ້ຢູ່ບໍ່ເບັ່ນ

× ຈັກກ່າວ ຜູ່ຜ່ານພົ້ນ ເຈົ້າຖິ່ນດິນເຜົ່າ ກ່ອນແລ້ວ

ບໍຣິອານນັບ ອະເນກນັບລຽນລ້ອມ

ດຳ–ດ່າງ–ແດງ–ຫາງກົ້ນ –ຫາງຍາວພ້ອມພ່ຳ

ເຂົາກໍ ແຫນແຫ່ເຈົ້າ ແອນໄອ້ລູບເລັຽ

× ເຈົ້າຖິ່ນ ດິນຈີ່ຫ້າວ ເບັ່ນເອກໃນຝູງ

ຄອງບັນລັງ ນັ່ງດົນຈົນເຖົ້າ

ເພລາຍ້າຍ ພັງຍານແຂ້ວຫລ່ອນ

ຂົນກໍຫລ້ອນ ເບັ່ນເຮື້ອນຢູ່ເລິງ

× ມັນກໍ ບໍຣິໂພກຊິ້ນ ແກມດູກອຽນລັກ

ທ່ອນແບ່ງປຸນບັ່ນໝາ ຮ່ອມພັນພົ້ງເຊື້ອ

ຕົນດຽວເຈົ້າ ເຕັມພຸງບໍ່ຮ້ອນທ່ອງ

ມີທ່ ທອງດູກໄອ້ ທຽວແຫ້ນເລືອກເລັມ ແທ້ແລ້ວ

× ອັນວ່າ ໝາສ່ຳນ້ອຍ ໃນຕລາດກໍມີຫລາຍ

ເຂົາກໍ ຊູມແຊວຄອກ ເຂັ້ຽກອງຂີ້ຫຍັງເຫຍື່ອ

ລາງໂຕໃດ້ ກະປ໋ອງນົມ–ເຂົ້າຕົ້ມເງື່ອນ

ລາງຜ່ອງໄດ້ ຕອງແຫ້ງທ່ປາ ກໍມີ

× ລາງພ່ອງໄດ້ ດູກໄກ່–ພຸງໝູ

ລາງພ່ອງຊອຍເລີຍອົດ ບໍ່ໄດ້ເລັຽເລັມຈ້ອຍ

ສຸດແຕ່ຊອມຕາລ້ຽງ ດັງດົມສືບກົ່ນ ຣຸມແລ້ວ

ໂຊກບໍ່ພານ–ພານບໍ່ພໍ້ ໂດງຮ້າຍກະດູກດວາຍ ແລນໍ

× ເຈົ້າຖຸ້ມ ດົມຈີ່ທ້າວ ເຊຽງຊີ່ພາຫລົງ

ກຳເນີດ ນິມານດາ ຊີ່ແດງທາງກົ້ນ

ນາງແດງນີ້ ກາເມນິເລືອກ

ມັນຮ່ວມ ສົມເສບຊ້ອນ ຊົມຊູ້ທົ່ວເມືອງ ແທ້ແລ້ວ

× ຂອບເມື່ອ ຈັນທຣ໌ຈາກຟ້າ ແປດຕ່ຳຈອມສິບ

ແດງກໍ ແປນໃຈຮັກ ສວາດສົມຊົມຊູ້

ຫລາຍຊາຍຊ້ອນ ກາງເມືອງກົ້ນຕໍ່

ຮ້ອງໂຫ່ ຫອນຮຽກເອີ້ນ ພາຜູ້ເພື່ອນໃຈ

× ແມ້ງນີ້ງ ແດງບໍ່ຊ້າ ດັພຕຶ່ງນົມຕຶງ

ສອງລຽມຕູມຈາຕຸ ຕັ່ງເຕັມປູມບຸ້ງ

ມັນມີທ້ອງ ນານທາງດອບເຮ່

ໄດ້ລູກນ້ອຍ ນາມເອີ້ນ ບັກພໍ່ຫລົງ

× ບັກພາ ຫລົງລູກນ້ອຍ ກຳເນີດຊາຕາ

ເກີດເມື່ອ ອັງດານແຮມ ບ່າຍສາມຍາມດ້າຍ

ນີ້ເກີດ ແຂງແຕ່ຍາມຮ້າຍ ຫາມຜີຮອດບ້ຳ

ແດງຈື່ງ ຫວງຫ້ວງທ້າວ ກຸມານນ້ອຍພໍ່ບໍ່ມີ

× ທິອາການ ຜ່ານພົ້ນ ດົນເຕີບອີແດງມັບ

ຍັງທີ່ ບາຄານຫລົງ ລູກມັນສອນພ້າ

ເຕີບໃຫຍ່ ກາງອຽງກອ້າງ ກາງປອງກາງຕລາດ

ຮູບຮ່າງສົມ ເຜົາໝ້າ ສູງພົ້ນເພື່ອນໝາ

× ເຂົາວ່າ ປີຕຸເຣດໄທ້ ບັກນ້ອຍໜຸ່ມໝາຫລົງ

ເຊື້ອຊາດ ອາລເຊຊຽນ ພວກຜິວຂາວລ້ຽງ

ຫລົງຈື່ງ ຂິງຂັງກ້າມ ກິງກັງກ້າເກັ້ງ

ເຊື້ອພໍ່ກູປະເສີດແທ້ ທັງດ້າວກ່າວຂວັນ

× ເຕີບໃຫຍ່ ວັຍແກ່ກ້າ ອົງອາດໃຈຫານ

ມັນເລົ່າ ມິເຕໄຊ ຂົ່ມໝາດາຖ້ວນ

ມັບແຕ່ ຂົວດິນຕັ້ງ ຄຸງແດນແຄວ້ນເຂດ

ຊື່ວ່າ ໝາຕລາດເຊົ້າ ມີຍ້ານຍ່ອນໃຜ

× ໃນບ່ອນ ໂຮງປາດຊຸ້ນ ບ່ອນຊີງອ່ອນລວງຂາຍ

ແປດຂີດ ເບັ້ນໄລເຕັ້ນ ຫລອກຕາຄົນເຊື້

ບັກຫລົງ ຈອງເບັ້ນເຈົ້າ ໂຄງຄວາຍເມື່ອເລີກລາດ

ທວງເຂດ ແພງດູກໄອ້ ອອຍຈ້າງຈອບສາວ

× ຈາກນັ້ນ ມາພ່ານີ້ ກໍຫລາຍຂອບເພລາ

ລູກອີ່ແດງ ທີ່ຕາຍດັບ ຈື່ງບໍ່ຽມວັຍໄປເລື້ອຍ

ຈາກໜຸ່ມ–ກາຍເບັ້ນເຖົ້າ ໜັງຍາມຂີ້ເຮືອນຟາດ

ບັກຫລົງ ຈອມຕລາດເຊົ້າ ຊິເຫັນແຮ້ງຮ່ອມຜົ້ນ ແລນໍ

× ຍາມເມື່ອ ມັນຢູ່ສ້າງ ຄອງເຂດອານາ
ບໍ່ທ້ອງ ໃຍສຸກທຸກ ສຸມັກຂາຂົງດ້າວ
ເຕໂຊຄຸ້ມ ອະຫັງການເກີນຂນາດ
ຍົກຍື່ມ ຍໍພວກພ້ອງ ດຽວເຈົ້າໃຫ້ນັ້ງສູງ

× ບັກໃດ ເລັຽລູບເລ໊ອຍ ຈ້ອງຈອບປະແຈງຈົບ
ບັກຫລົງ ປູນບຳເໜັດ ຕຳແໜ່ງນາຍມີໜ້າ
ອີ່ໃດ ຍອມໃຫ້ແທງກົ້ນ ກິນຟຣີບໍ່ພິຫລິກ
ບັກຫລົງ ຍໍຍົກຂຶ້ນ ໃຫ້ເບັ່ນນ້ອຍນັ້ງສເບີຍ

× ດູກຄວາຍ ທວງທອບໄວ້ ແຈກຈ່າຍເມັຽໜາ
ເຂດໃດ ອາຫານດົກ ມອບອາງແກ່ພົງເຊື້ອ
ຍາມໃດ ມີໂພຍຕ້ອງ ບັກຫລົງໂຕນເອົາໂຕລອດ
ເທສບານໄລ່ຄ້ອງ ມັນຜ້າຍຜ່າຍຜູ້ດຽວ

× ອັນທີ່ ສາວສ່ຳນ້ອຍ ໝາແມ່ໃນຝູງ
ມັນກໍ ກຸມເທັງເຕັກ ອົ່ມເບັ່ນເມັຽນ້ອຍ
ຂືນບໍ່ ຍິນຍອມດ້ວຍ ໂດຍດີກໍຈ້າງຈອບ
ດູກຄວາຍ ອອຍບໍ່ໄດ້ ກໍຈາຊ້ຳສົ່ງໝີ

× ຝູງສ່ຳນ້ອຍ ອ້າຍບ່າວປະຊາໝາ
ເຂົາກໍ ຈຳໃຈອົດ ອັ່ງທວງເໜ້າງ
ສຸດທີ່ ຊັງໝັງໝ້າ ບັກຫລົງແຮງຮ້ອຍທໍ່ ກໍຮຸນແລ້ວ
ມັນມີ ຝູງພວກພ້ອງ ແທນລ້ອມລຽບຣະແວງ

× ຊາດທີ່ ອຳນາດກ້ອ ມະນິເກີດເປັນທືນ

ບັກຫລົງ ຈອມບົງການ ລາດອະຣຸນ ຜູ້ລືມເຊື້ອ

ເຫລິງໃຈ ເຕໂຊເຈົ້າ ລືມຄຸນອຳນາດ

ເວນຈຶ່ງຕ້ອງ ຕໍ່າເຈົ້າເມື່ອລຸມ

× ໃກ້ຊິ ເປັ່ນເຫຍື່ອແຮ້ງ ແຮງອ່ອນຮອນຫັກ

ບໍຣິວານໃນຝູງ ຖືກທ່າລົງຫລອນທີ້ມ

ຕາຍຈາກ ໝາຫລົງເຖົ້າ ຜູ່ລືມຄີງຫລົງອຳນາດ

ມັນຈຶ່ງ ແດດັ່ນເສົ້າ ເມັຽນ້ອຍກໍ່ນອກໃຈ

× ແມ້ງນີ້ງ ສຸຣິເຍດຍ້າຍ ໂຕນຜ່າຍເວຫົນ

ຣາຕຣີ ແຍງຄີງຜາຍ ດຸ່ງເຖີງຢາມຢໍ້

ມິດ—ມິດ—ມົວໝອງເສົ້າ ສີດ່ຳອ້ອມໂອບ

ໄຟບໍ່ສົມຊີ່ພ້ຳ ມອນມ້ວຍມອດພະລັງ

× ບັກຫລົງ ຈອມຕລາດເຂົ້າ ມິທເມັ້ງຈົມຫລັບ

ຊວາດຕື່ນ ຈົ່ມໃຈຫັກ (ຫວານ ໆ) ເພື່ອຜັ່ນເປັ່ນຮ້າຍ

ຜັ່ນວ່າ ເຫີນເທາະຂົ້ນ ເວຫາກາງກາດ

ອາລະວາດໝູ່ແຮ້ງ ຝູງຮ້າຍພ່າຍພັງ

× ເຖີງຮຸ່ງເຊົ້າ ໃຈສັ່ນບໍ່ທັນຫາຍ

ຫາດູກຄວາຍມາເລັມ ເພື່ອໃຫ້ລືມຜັ່ນບ້າ

ກໍບໍ່ ມິທາງແກ້ ອາການເປັ່ນປລາດ

ອິດອ່ອນ ເຫງົາງ່ວມງ້ວງ ຢາກນອນເລື້ອຍເມື່ອຍກະໃຈ

× ຕາຫລັບ ມິນບ່ຂົ້ນ ບັກຫລົງຕ່າງໃນຈິດ

ຫລັບຕາ ລົງຍາມໃດ ເສືອກເຫັນແຕ່ຝູງແຮ້ງ

ອຸປາທານນີ້ ຫລອນໃຈບ່ຮູ້ສວ່າງ

ຮູ້ວ່າ ເວນຊອກພໍ້ ໝາເຖົ້າເມື່ອຊະຣາ

× ຜ່ານັ້ນ ໝານຸ່ມນ້ອຍ ໃນຕລາດທັງຫລາຍ

ເຂົາກໍ ຊູມແຊວເລາະ ຊອກສແວງເລັມແຫ້ມ

ເຫັນເຫດ ຜັຍພາຍໝ້າ ຫາລິທາກຫລິກ

ຮຽກປະຊູມຝັ່ງຟ້າວ ຜລັນພ້ອມໄຜ່ໝາ

× ຮອງປະທານຕລາດເຊົ້າ ທ້າວດ່າງທາງກຸດ

ບອກແກ່ ປວງສຸມັກ ໃຫ້ບ່າວເຕືອນປະຊາເຊື້ອ

ດຽວນີ້ ສາມໂມງຄ້າຍ ເທສບານອາລະວາດ

ເຮົາຍ່າຊ້າ ມາຜ້າຍຜ່າຍໝິ ເພື່ອນເອີຍ

× ເທສບານອອກຄ້ອງ ລາກແກ່ໄປຂັງ

ຂາຍສົ່ງ "ຄົນກິນໝາ" ສເລັ່ຽຫົວລະສອງຮ້ອຍ

ບໍຣະບອນແລ້ວ ຝູງໝາກໍຮ້ອງໂຫ່

ຫອນເທົ່າເຕີມບ່າວໃຫ້ ໝາຮູ້ຄູ່ຕົວ

× ບັກດ່າງ ເວົ້າອິ່ນອ້ອຍ ສຽງຄ່ອຍສຽງມິດ

ສູຢ່າ ຫລອນໄປປຸກ ບັກລູກຫລົງຜູ່ລືມເນື້ອ

ມັນຂົ່ມເຫັງເຮົາໄດ້ ຫລາຍປີກູເປີດໜ່າຍ

ຂັດນີ້ ໄດ້ເລີກແລ້ວ ໃຫ້ມັນມ້ອຍມອດມອນ

× ຝູງໝາ ເຂດຕລາດເຊົ້າ ຮ້ອງໂຫ່ຍິນດີ
ພ້ອມພ່າ ເອົາຕົນຫລົບ ຫລີກພັຍໜີຂ້ອງ
ຍັງທີ່ ໝາບັກຫລົງເຖົ້າ ນອນໂກນກາງຕລາດ
ຫລັບແຈບຈົມ ຈຶ່ງບໍ່ຮູ້ ວ່າມີຂ້ອງຍັກຄໍ

× ຊວາດຕື່ນ ຕົກຂະມ່າຮ້ອງ ເຫັງງເຫງກເຫັງງ ໆ !!
"ສູໄປຕາຍຢູ່ໃສເໝີດ ບໍ່ບອກກູວ່າເຂົາຕ້ອງ"
ສຸດທີ່ ຮຸນແຮງດົ້ນ ຄະໂຍງໂຕນເຕັ້ນຖີບ ກໍດາຍແລ້ວ
ບ້ວງແຮ່ງຮິງຮັດແໜ້ນ ແຮງເຖົ້າເຫລົ່າຖອຍ

× ເຂົາຈຶ່ງ ບັງຄັບຂົ້ນ ລ້າກກົງຂັງ
ບັກຫລົງ ຈົມຕາແຈ ໂສກໃຈນ້າຕາຍ້ອຍ
"ໂອນໍ ! ພົມພົງເຊື໊ອ ຊູມໝາກາງຕລາດ
ສັງບໍ່ ເຕີມບ່າວໃຫ້ ກູຮູ້ເມື່ອພົ່ນແລນໍ ?"

× ເຂົາກໍ ລາກແກ່ລ້ ຈອນຈາກໄລລັບ
ບັກຫລົງ ເຣຣົມອຸກ ເພື່ອນເອົາໃຈເອັ້ນ
ພອກໄພ່ ໝາປະຊາເຊື໊ອ ຊັຍໂຍຮ້ອງສົ່ງ
"ຕາຍໃຫ້ແຮງໂຫ່ທົ້ມ ມີງຫ້ອມບັກຊາດໝາ !"

*ບົດກອນສັ້ນ ໆ ຍາວ ໆ* ແບບທີ່ຈະໃຫ້ອ່ານຕໍ່ໄປນີ້ ຕົກເຮັ່ຽເສັຽຫາຍໄປຫລາຍສຳນວນຈົນຈື່ບໍ່ໄດ້ແລະບໍ່ໄດ້ຈື່....ເທິງໝົດລ້ວນແລ້ວແຕ່ເຄີຍຕີພິມໃນ "ເພື່ອນແກ້ວ" ມາແລ້ວແຕ່ດົນກໍ່ມີ ບໍ່ດົນເທື່ອກໍ່ມີແຕ່ວ່າຫາຕົ້ນສະບັບບໍ່ເຫັນ ລາງສຳນວນແມ່ນພີ່ນ້ອງວົງວານມ້ຽນໄວ້ໃຫ້

ເອົາແຕ່ ຊິເລືອກອ່ານ ເລືອກຊົມໂລດເທາະບໍ່ຊ່າງວ່າ.... ຂອງວ່າໂຕເອງແຕ່ງ—ໂຕເອງລືມມ້ຽນ.... ຊິຕູ່ວ່າພວກໜັງສືພິມນິຕຍະສານຊ້ຳງອົນໄປລົງເອົາເງິນບໍ່ມ້ຽນຕົ້ນສະບັບໄວ້ໃຫ້ກະວ່າບໍ່ໄດ້....ເຂົ້າທຳນອງ "ແມວລັກກິນປາໄປດ່າແມວ ມັນບໍ່ຖືກ....ໃຫ້ຖືກຕ້ອງ "ເຕະເມັຽ" ມັນຈັ່ງແມ່ນ....

ເອີແລ້ວເມັຽເຮົາມີຢູ່ໃສເກາະລະ ພໍຊິໄດ້ແພງໄວ້ "ຊ້ອນ" *ບາດເທື່ອແມວລັກກິນປາ...*



# ບັກກິລາຂາຂາວ

* ຕາມດັ້ງ ຄອງຮີດບ້ານ ການແຕ່ງແປງໂສມ
ຍິງສາວ ເຮິງຜົມມວຍ ບ່ຽງສໃບຄຽນສົ້ນ
ບ່ຮ່ອນ ສວມກະໂປງສັ້ນ ຜົມດັດລອນຈອນຈອກ
ຄືດັ່ງ ຫັນຊາດເຊື້ອ ຊົມດ້າວອື່ນເຂົາ

* ໂຮງຣຽນ ທຸກແຫ່ງຫ້ອງ ມີແບບປະຕິບັດ
ຕາມສຖານສຶກສາ ຣະບຽບວາງລົງໄວ້
ວ່າໃຫ້ ອິດຖິເຊື້ອ ຣຽນກິລາເຝິກແອບ
ນຸ່ງສົ້ງສັ້ນຣັດກົ້ນ ກາງກວ້າງຄ່ອງສນາມ ໝ່າຍເດ໊ !

* ທ່ອນຄຶດວ່າ ການນຸ່ງສົ້ງ ນັ້ນມັນເປີດແປນຂາ
ຫລືວ່າ ອາຍາສິດ ເພິ່ນມັກຊົມແນວນັ້ນ
ພວກຊ່ຳມາຣິນ້ອຍ ຈູມຈິພວມສອນໃຫຍ່ ລາວນັ້ນ
ເຂົາມີອາຍບ່ຢາກຣີ້ ຂາໂຕ້ສູ່ໃຜ ຜ່ແລ້ວ !



# "ມ້າບັກລາຍຕາຍຄາຕີນ"

★ ກະຢາກຫົວເຣີເຣີ່ຍເຈັ້ມ   ຊ້າສາດອກກະໃຈດຶດ
  "ງິດ" ກຳແພງລົງທີ່ມ   ເຮັດ "ບັກລາຍ" ບັກຫລາຍລ້ານ
    ເຮັດບໍ່ຕອງຕາຖ້ອມ   ການໄກໄອ້ເພື່ອ
      ວາງແຜນຜາລຶກໂກ້   ສະຫາວຫ້າວຫ່າວ "ຢາກດັ່ງ"

★ ຝົນອັບຍອກທ່າທົ້ມ   ຊ້າຕົກໝ່າບໍ່ມີນຫູ
  ຕົກພາໂລພາງານ   ຍັ່ງປີມີເອ້ອນ
    ຈົນ "ບັກລາຍ" ກໍແພງຂ້ອຍ   ຄາຕີນຂີ້ຕາປຽກ
      ຈຳຕ້ອງຂຸດກົ້ນຖີ້ມ   ເສັຽລ້າເພື່ອນຫຍັນແລນໍ່



# ໂລກ ກັບໂຣຄສະແລບແຕບ

■ ມາຈັກກ່າວ  ການແຕ່ງເນື້ອ  ແປງເພດສັຕຣີລາວ  ກ່ອນແລ້ວ
ລາງກໍ  ທຳຊົງຜົມ  ດັ່ງກອງຂີ້ຫຍັງເຫຍື້ອ
ສອມສຸບສົ້ນ  ກະໂປງເຂີນດຸງງ່າມ  ຂານັ້ນ
ອຸກອັ່ງ  ໃຈພອກອ້າຍ  ແລແລ້ວລອດກະສັນ  ອຸ່ນເອີຍ

■ ຫລີມ່ອມ  ເຜີຍແຜ່ໃຫ້  ເຫັນບ່ອງແປວສວັນ  ມັ້ນມໍ່
ຈໍ່ງເລົ່າ  ເບີຍແບນເອີກ  ຕໍ່ງເຕັ້ມຕິງຕັ້ງ
ຍາມມ່ອມ  ແຍງດີງຜ້າຍ  ດູເຜືອມເຜື່ອດສມັ້ນ  ອອນຊອນເດ
ປຸ່ມດັ້ງມີ  ໝາກມ້າ  ແຊມຊ້ອນເຊື່ອງຢູ່ໃນ  ມັ້ນແລ້ວ

■ ອ້າຍວ່າ  ຂອງໝູ່ນີ້  ເບັ່ນສິ່ງເພີງສງວນ  ແທ້ມາ
ບໍ່ທ່ອນ  ເປືອຍແປນຫລາຍ  ອວດອົງປະສົງອ້າງ
ຮູ້ບໍ່ວ່າ  ຊາຍເຫັນແລ້ວ  ຕະລຶງແລຢາກຄຳລູບ
ອັດອັ້ນແດດ່າວດີ້ນ  ແນມຄ້າງຢູ່ວ່າງ....ອັນ  ມັ້ນແລມາ

■ ງາມມັ້ນ  ງາມບໍ່ແພ້  ລະແມອວດບ່ອນຄວນລັບ
ໃຜທ່ອນ  ແນມເມີນພີ  ຫາກໄດ້ເຫັນປະການນີ້
ໂນ້ມມ່ອງ  ໃຈຊາຍໃຫ້  ຂລັງຄາດະນຶງກ່ຽວ  ດຽວມັ້ນ
ຕັ້ງຕໍ່  ເຊາະຊອກກ້ຽວ  ຢາກຈູງນ້ອງເຂົ້າບ່ອນນອນ  ບໍ່ຢ່າແລ້ວ

■ ຍາມໃດ ຫາກໂລກຍັງແຄ່ຄ້າງ ຄ້າງແຄ່ມະແລມແຕມ ເຮື່ອງນີ້

ສະແລມແຕມອ່າແປນຂາ ກະຫລາກຫລາຍ ກະຫລິກຫລີ້ມ

ກະຂອນຊາຍ ກະຫາຍຊ້ອນ ສລອນລຽນປະຫຽນໃຄ່

ອະນົງນາງ ສະໂອດໂອ້ງ ສະຫາວທ້າ ກິເລດການ ເກັ້ງນໍ

■ ການກິຈ ເກືອກກົ້ວ ກາດເກື່ອນ ກະລິຍຸກ ຮຸ່ງແລ້ວ

ທັມມະ ໝອງມອມມົວ ມ່ອມເມິນບໍ່ມອງຊ້ຳ

ລືມໄລສັ້ຽງ ຂອງເດິມບໍ່ຫລິງລ່າ ແລນໍ່

ເສັຽດາຍເດ ຄວາມເປັ່ນລາວກ່ອນກີ້ ຜົມເກົ້າແຕ່ເກົ່າມາ ພໍ່ແມ່ເອີຍ



# "ຊັງ"

- ຊັງມາຍ ຊັງໝ່າຍໝ້າ ຍ້ອນເປືອງໄກ່ໃນລົກ
  ຊັງຫອຍທານ ໝ່າຍແຕ່ກິນເປັນໜີ້
  ຊັງຊາວບ້ານ ນິນທາມຸສາວາດ
  ຊັງພວກພ້ອງ ກິນລ້າຄ່າບໍ່ແທນ

- ຊັງຍິ່ງ ຊັງເມກເຝື້ອ ກັບເກີດເປັນຝົນ ເຮັ່ງມໍ
  ຊັງຖນົນວຽງຈັນ ປຽກຝົນຂີ້ຕົມຟັງ
  ຊັງ "ນາງຈ້າງ" ເຕັມເມືອງຄ້າເຕົ່າ
  ຊັງແມ່ມ້າ ທຽວຖ້ອມແຕ່ທົ່ງນາ ໝ່າຍເດີ້ !

- ຊັງຂີ້ໝ້າ ພວກຂາຍຊາດ ແນວລາວ
  ຊັງແກວແດງ ຍ່ຳຍີຕີປຸ້ນ
  ຊັງສົງຄາມນານແລ້ວ ລາວເຮົາບໍ່ໂຮມຊາດ
  ຊັງປະຊຸມຊັກຊ້າ ຄາຂ້ອງບໍ່ທ່ອງທັນ

- ຊັງແມ່ເຮືອນແມ່ບ້ານ ມັກຈ້ອກີລາບັດ
  ຊັງຫອຍເບີ້ ເຖື່ອນເຕັມລານຊ້າງ
  ຊັງພວກກິນໂກງສໍ້ ບັງຫລວງລວງຣາສ
  ຊັງຜູ້ສາວສ່ຳນ້ອຍ ເຜີຍກົ້ນອອດຂາ

- ຊັງເຈັກຈີນພໍ່ຄ້າ ຊື້ຖືກຂາຍແພງ
  ຊັງສັງຄົມ ເນົ່າເໝັນເປັນຮ້າຍ
  ຊັງກົດໝາຍມີປຶ້ມ ມິແປງແກ້ງກັ້ນ
  ຊັງກາບກອນຂອດຂ້ຽວ ເລີຍຈ້ອຍບໍ່ຢາກຂຽນ

# ສຳນຽງບອກພາສາ ວາຈາບອກຕຣະກູລ....?

□ ບູຮານວ່າ ສຳນຽງເປັນສິ່ງຊີ້ ໝາຍບອກພາສາ
ສຳນວນວາຈາຂານ ບອກພັນພົງເຊື້ອ
ສຳນຽງ ສຽງລາວເອົ້າ ຮຽນພັ່ງດູຫລາກ ກໍໃຈແລ້ວ
ບໍ່ເຫັນ ໝາຍບອກຊີ້ ວ່າລາວນີ້ແມ່ນລາວ

□ ຍ້ອນສຳນຽງທີ່ເອົ້າ ປົນຝຣັ່ງດັງໄນ
ສຳນວນວາຈາຂານ ຂີດຂຽນກໍພໍຮູ້
ວ່າລູກລາວນີ້ຍັງດ້ອຍ ໃນເກມພາສາສາດ
ຈັກແມ່ນ ບົນບອກຊີ້ ວ່າພົງເຊື້ອເຜົ່າໃດ

□ ພາສາໄທສອດເຂົ້າ ຊຶມແຊກເປັນກະດັດ ກໍມີ
ລາງຜ່ອງ ເອົາພາສາ ຝຣັ່ງປົນສົມແລ້ວ
ຫລັກການ ຂຽນຕາມເຄົ້າ ສຽງຈາພາໃຫ້ແປ່
ຍັງບໍ່ມີຜູ້ແກ້ ຫລີກ້າບັງຄັບຂຽນ

□ ມີແຕ່ຕິ ແຕ່ເຣື້ອງ ວິພາກວິຈານ
ລາງກໍ ທຳຕົນເປັນ ດັ່ງມີຜຍາລ້າ
ຈັດປະຊາມະຕິຂຶ້ນ ອິງຕະນິງມັນຊ່າ
ເປັນເວທີຕອບໂຕ້ ເຣື່ອງຕາມເຄົ້າແລະສຽງ

□ ແມວວ່າ ເອົາໝ່ອຍແກ້ວ ປະດັບຍອດມົງກຸດ

ເອົາມະນີໂຊແສງ ໃສ່ກຳໄລຂາກ້ອງ

ຄວາມຜິດຂອງຄົນໃຊ້ ບໍ່ມືນຕາໃຫ້ແຈ້ງທ້ອ

ບໍ່ຄິດກ່ອນຈຶ່ງເວົ້າ ສະຫາວຍ້ອງຍົກຕົນ

□ ສຳນຽງ ເປັນສິ່ງຊີ້ ໝາຍບອກພາສາ ແທ້ລື ?

ສຳນອນ ສຳນຽງລາວ ເທົ່າທີ່ຮຽນຮຽນຮູ້

ຊື່ວ່າ ເປັນເມືອງຂຶ້ນ Colonie ຊາດຝຣັ່ງ

ລາງກໍ ຕິດແສດດ້ວຍ ທີ່ເຄີຍຂຶ້ນຕໍ່ໄທ ທ່ານເອີຍ

# ໝາຈອກເຫົ່າຊ້າງ

★ ດຽວນີ້ ການສ້ຣາດ ເລີຍມິດງຽບສຽງລື

ມິດຮອດ ກັມມະການ ຜູ່ກອດກາໂກງສ້

ມິດຮອດ ສາມານເຊື້ອ ພວກກິນຫລວງບັງຣາດ

ມິດຈັດ ຈີ່ລີຈ້ອຍ ຫອຍໄຂ້ກໍບໍ່ປານ ເຈົ້າເອີຍ

★ ຮູ້ວ່າ ຜີຫ່າຄັ້ມ ຄໍພວກມັນໂກງ ສະແມ່ງບໍ່

ຕາຍດັບແນວ–ວົງວານ ລອດເລີຍເຊົາສ້

ຮູ້ວ່າ ກັມມະການເຈັບທ້ອງ ໜີໄປນອນຢູ່ເມືອງນອກ ໝົດມັ້ນ

ຈຶ່ງບໍ່ ມີຂ່າວໃຫ້ ຊາວບ້ານອ່ານຟັ່ງ ດັ່ງນີ້

★ ຮູ້ວ່າ ຄາແຄ່ຄ້າງ ອິດທິເດດເຕໂຊ ໃຜມັ້ນ

ແນວວ່າ ມີນາຍຫລາຍ ລອດເບັ່ງກັນຕາມຂັ້ນ

ຄັນຈັກ ຕີຫົວປາ ຊ້າເລົ້າເຄືອງຫົວເຈົ້ານາໂຄ ນາກໃຫຍ່

ກາກິນປີງ ຊ້າພັດຄາຢູ່ຫັ້ນ ຄໍແຮ້ງດັ່ງດຽວ

★ ຄັນຈັກ ຈັບນາຍ ກ. ຊ້າເກງໃຈພໍ່ເຖົ້າ....

ຄັກຈັກ ຈັບນາຍ ຂ. ຊ້າພີ່ນ້ອງທາງແມ່....

ຕົກມາເຖີງນາຍ ຄ. ຊ້າແມ່ນຄົນຮ່ອມບ້ານ....

ເຮັດທຸກ ໆ ເຕື້ອງ ໆ ເລີຍແລ້ວເຮັດບໍ່ລົງ....

★ ຄິດ ໆ ຄິດແລ້ວແຄ້ນ ແສນໜ່າຍເມືອງລາວ
ໜ່າຍກໍ່ ຈໍາທົນອົດ ເມື່ອເກີດເປັນລາວແລ້ວ
ໃຜເດນໍ ຊິມາແກ້ ບັນຫາລາວໃຫ້ແລ້ວທໍ່ອ
ບາບໜັກ ຕົກແກ່ພວກໜຸ່ມນ້ອຍ ຈະເຣີນໄດ້ໃຫຍ່ລຸມ ແທ້ແລ້ວ

★ ປຸນດັ້ງ ເຖົ້າເກົ່າເຣື້ອງ ພຍາອ່ອຍໃຫ້ຄົນຄິດ ປາງນັ້ນ
ຄິດໄປຫລາຍ ແຮ່ງຄິດັກ ດັ້ງຄໍາບູຮານເວົ້າ
ວ່າກວາງ ກິນໝາກຂາມປ້ອມ ໄປລາກົ້ນຂີ້ມັ້ງ
ຄັນວ່າ ມັ້ງບໍ່ຂີ້ ສາມມື້ກະຕ່າຍຕາຍ ວ່າມາ....

★ ປຽບດັ້ງ ຄົນຣຸ່ນນີ້ ວາງຣະບຽບໃຫ້ເມືອງຮົກ
ບໍ່ແກ້ໄຂບັນຫາ ໃຫ້ລ່ອງເລີຍດີຂຶ້ນ
ຕົກເຖິງການພາຍໜ້າ ຍິ່ງວົ່ນວາຍຂຽວຂອດ ອີ່ຫລີແລ້ວ
ແນວບໍ່ແກ້ແຕ່ເຄົ້າ ປາຍຫຍຸ້ງຍິ່ງທະວີ ທ່ານເອີຍ

★ ໄດ້ແຕ່ຄິດ ໄດ້ແຕ່ເວົ້າ ແນວເຮົາບໍ່ "ສູງສັກ"
ເພີ່ນບໍ່ເອົາຫົວຊາ ສ່ຳເຮົາ "ຊາວບ້ານ"
ໄດ້ແຕ່ ທົນທວງແຄ້ນ ຄໍາຈາຈ້ອຍຈົ່ມ
ຄິໝາຈອກ ເທົ່າຊ້າງ ສານເຈົ້າອະເຣີຍຫົວ ທຸ່ມມໍ

★ ຍ້ອນວ່າ ສັງຄົມຖືພຣະເຈົ້າ ເປັນໃຫຍ່ຄື ເງິນຕຣາ
ໃຜຜູ່ ເປັນຄົນທຸກ ຍ່າຫວັງຊິດີໄດ້
ຄິດໄປຫລາຍມັນບໍ່ມີຫຍຸ້ງ ມຸງມາຄືຮາກໄຜ່
ຄິດໄປຫລາຍມັນບໍ່ມີພົ້ນ ພໍແລ້ວບໍ່ຢາກເຫັນ ໜ່າຍເດ !

# ຜູ່ແແທບກ່ອບເລືອກ

■ ຟັ່ງສຽງ ລິ່ຊ່າຕົ້ງ ວ່າມີເລືອກສະມາຊິກ

ສະພາເທ— ສະປາລະ ໄປມັ່ງຕາງຊາວບ້ານ

ຕ່າງກໍ່ ໂວ ໆ ເວົ້າ ເອົາ *ດີ* ອ້າງອວດ

ມີ *ດີ* ແທ້ບໍ່ລະອ້າຍ ! ຫລີດຸຍໂອ້ອວດ *ດີ*

■ ແມວວ່າ ຍາມຢາກໄດ້ ກໍອ້ອຍອິ່ມອອຍຫວານ

ດີດັ່ງ ປອງງົມຂາ ຢາກລູບນົມໃນເນື້ອ

ສົມໃຈແມ້ງ ຢາກອັນຫາຣອດຜ່າບາດ

ພໍໄດ້ເບີ່ນກໍມັ່ງແຫ້ນ ບໍ່ແທນອ້າງວ່າຕາງ

■ ຜູ່ແທນດີກ່ອນໄດ້ ໄດ້ແລ້ວມັ່ງດັ່ງແຫງນ

ສົມໃຈຫວັງ ເລົ່າລືມຄວາມເວົ້າ

ຊາດວ່າ ອຸນກະຈາມົ້ ເມົາມ້າລາຍໄຮ້ປໂຍດ

(ເວົ້າຈາອ້າງອວດ) ດີເພື່ອຢາກໄດ້ ບາດຍາມໄດ້ແລ້ວບໍ່ດີ ກໍ່ມີ

■ ຍັງໄບ່ທັນມັ່ງແຫ້ນ ກໍຫອນເທົ່າແຊວຊະ

ບັກ ກ. ໂກງ ບັກ ຂ. ກິນ ດ່າປະມານປະຈານທ້ອງ

[ບອກວ່າຂໍແຕ່ໃຫ້ໄດ້ເບີ່ນເບິ່ງເທາະ] ຣຽມຊິອາສາສ້າງ ຖຸມົນວຽງໃຫ້ກວ້າງຮາບ

ອາສາປາບແມ່ຈ້າງ ເພມ້າງສິ່ງບໍ່ດີ

■ ຫາແຕ່ *ດີ* ອອດອ້າງ ວາງທ່າວ່າໂຕ *ຄັກ*

*ຄັກ* ສ່ຳໃດຜູ່ແທນເຮົາ ນອກສະພາຈຶ່ງສຽງ *ກ້າ*

*ກ້າ* ນອກເຕົາບໍ່ເອົາເຣື້ອງ ເມືອງຊິຈົມບໍ່ຫານ *ປາກ*

*ປາກ* ແຕ່ຍາມຍາກໄດ້ ຄະແນນຊອ້ານສົ່ງ *ເສີມ*

■ [ຍາມໄດ້ເປັ່ນແລ້ວ] ມົວໄປ *ເສີມ* ແຕ່ດ້ານ ອຳນາດ *ເຕຊະ*

*ເຕະຊະ* ຄຳສາບານ ທີ່ວ່າອາສາ *ສູ້* [ລືມເລີຍວ່າຊັ້ນເທາະ]

*ສູ້* ບໍ່ໄຫວກໍປິ່ນເຈັ້ຽ ສົມບົມຈ້າງ *ຈອບ*

*ຈອບ* ເບິ່ງເອົາເທາະແມ່ນ້ຳ ປະຊາເຊື້ອເຜົ່າ *ວຽງ*

■ *ວຽງ* ຈັນ ພອມຊ່າຫ້ອງ ຮ້ອງໄຫ່ໂພທະ *ກະ*

*ກະ* ຄະເນປອງໝາຍ ມັ່ງສະພາສມັຍ *ໜ້າ*

*ໜ້າ* ຜູ່ແທນຄຸຍໂມ້ ໂວຫານໄດ້ທໍ່ *ວ່າ*

*ວ່າ* ທໍ່ຍັງບໍ່ໄດ້ ພໍໄດ້ແລ້ວວ່າບໍ່ *ເປັ່ນ*

■ *ເປັ່ນ* ກໍເປັ່ນທໍ່ແໜ້ນ ຫາຊອກ *ລາພະ*

*ລາພະ* ໂລພາຫລົງ ໂລບບັງຫວັງ *ປ້ຽວ*

*ປ້ຽວ* ບິດເບືອນປົບປິ້ນ ກິນໄຕ *ນ້ອງພີ່*

*ນ້ອງພີ່* ເລືອກຜູ່ແທນໄວ້ໃຊ້ ຈຶ່ງຄອນຕ້ອງຮໍ່ມ *ຕອງ*

■ *ຕອງ* ກັ່ນເອົາຜູ່ກ້າ ປາກວ່າໃຈ *ເຄິງ* ຊອບເຍີ

*ເຄິງ* ໃຈເຖິງກັມມັງ ກອບການເມືອງ *ບ້ານ*

*ບ້ານ* ເມືອງເຮົາຈົມໄຮ້ ເຂັມໃຈຍ້ອນຄົມ *ກອບ*

"*ກອບ* ໂກຍ" ໃຜວ່າດີ "ກອບກູ້" ຊູຊອ້ານຊ່ອຍປະຊາ ທ່ານເອີຍ

# ເຣື່ອງຂອງສົງຄ໌ (ຈົ່ງອາເດຈະ) ຫົງສິລ (ຢູ່ແດ່)

- ໂຕຫາກ ບໍ່ຊ່າງເຈັ້ຍ ຕີໄມ້ວ່າບໍ່ທົ່ມໝຽວ

  ໂຕຫາກ ເປັ່ນຄົນຄຽວ ວ່າແຕ່ກົມນຳພ້

  ຍາມຮຽນ ເມົາມົວຫລິ້ນ ຜົ່ນເອົາ "ເບີ" ຢາກຮອຍລາບ

  ຍາມເສັງ ສອບບໍ່ໄດ້ ພານເອົ້າແງ່ງອນ....

- ຊຸມນີ້ ຊື່ວ່າ ເປື້ອງແຜ່ນຜ້າ ເຫລືອງທົ່ມໂກນຜົມ

  ໃຊ່ວ່າ ເປັ່ນສົງຄະ ພ່າເພັງສິນສ້າງ

  ເສັງຕົກ ພານຫາຂໍ້ ກົມມະການພຣະຄູເກົ່າ

  ສ້ອງສຸມ ແຊວບ່າວທ້ອງ ຄະແນນໃຫ້ບໍ່ທ່ຽງທັມ ວ່າມາ

- ບັນດິດ ທ່ານຜູ່ຮູ້ ພຣະຄູທ່ານຜູ່ທົງສິນ

  ຍ່ອມຊາບ ມູລຄວາມຈິງ ສິ່ງທີ່ຄວນ—ບໍ່ຄວນແລ້ວ

  ສົ່ງໃດ ທຳຕົນພ້ຽງ ຫົວພຽງທໍຣະຊາດ

  ປຸນດັ່ງ ມານແບ່ມ້າງ ພຣະທັມເຈົ້າພໍ່ພຸດໂທ ແທ້ແລ້ວ

- ຮຽນວ່າ ຄວນທີ່ຢູ່ສືບສ້າງ ສິນພ່ຳບຳເພັນ

  ໂດຍສັມຕິ ສືບໄປບ່ຳໄບ້

  ບັ້ນຍາ ປາຣະມີຕັ້ງ ການຮຽນພຽນພາກ

  ບໍ່ແມ່ນ ຮຽນຂີ້ດ້ານ ປອມຂໍ້ສອບເສັງ

- ຄາຣະວາດ ເຮັດດັ່ງນັ້ນ ຍັງມີໂທດສະຖານໜັກ

  ສົງຄ໌ຜູ່ ຄອງຈີວອນ ທົ່ມເຫລືອງເຮືອງເຫລື້ອມ

  ຄວນທີ່ ສັງວອນໄວ້ ຈັຣຍາມາຣະຍາດ

  (ຈັກໄດ້ຊື່ວ່າ) ເປັ່ນຜູ່ ກໍ່ເຫດຮ້າຍ ໃຫ້ເມືອງບ້ານແຕກຮື ແທ້ແລ້ວ

ເຣື່ອງສັ້ນຊຸດ

# "ຜູ້ຍິງບໍ່ຜູ້ຍິງ"

ຂອງ

## ແລງ ພູຜາເງິນ

ໃຜໄດ້ອ່ານຮັບຮອງວ່າ ຕ້ອງໄດ້ຫົວທັງນ້ຳຕາ
ອ່ານແລ້ວ ຈະຮູ້ເອງວ່າ "ແລງ" ບໍ່ໄດ້ແລ້ງ
ນ້ຳໃຈສຳຫລັບສັຕຣີເພດ
ສົມເພດເວທນາເຫລືອທີ່ສຸດ ຈົ່ງໂອ່ຍຄາງອອກ
ອອກມາດ້ວຍຄວາມເຫັນອົກເຫັນໃຈວ່າ...

# "ຜູ້ຍິງບໍ່ຜູ້ຍິງ"

ມີຂາຍຕາມຮ້ານຂາຍໜັງສືທົ່ວໄປ

\- ຕິດຕໍ່ກັບ -

# "ປາໄບ" "ດວງຈຳປາ"

□ ຫລືກຸ່ມນັກຂຽນຄນະ □

## "ໜານໄຜ່"

\- ທາງຈົດໝາຍສົ່ງ -

ຕູ້ ປ.ນ. 230

ນະຄອນວຽງຈັນ ພຣະຣາຊອານາຈັກລາວ

ພິມທີ່ *ປາກປາສັກ ການພິມ*

9–11, ຖນົນຟ້າງູ່ມ ວຽງຈັນ

( ທາງແຄມຂອງ )

ໂທຣ. 2262

ພ.ສ. ໘໕໑໔ ຕຸລາ – 1500